ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
ການຮ່ວມມື ລາວ-ເຢຍຣະມັນ

# ຂ່າວໃບລານ

ປີທີ VIII ສະບັບທີ 16* ມິຖຸນາ 2000

PRESERVATION OF LAO MANUSCRIPTS PROGRAMME

LAO-GERMAN COOPERATION. NEWS BULLETIN * June 2000

## ກອງປະຊຸມ ທີ່ແຂວງຈຳປາສັກ



ແຂວງຈຳປາສັກ ພາກໃຕ້ສຸດຂອງປະເທດ ເປັນຈຸດທີ່ໂຄງການໄດ້ເປີດສຳມະນາ "ວ່າດ້ວຍ ໂຄງການປົກປັກຮັກສາໜັງສືໃບລານ "ກ່ອນການລົງສຳຫລວດຕົວຈິງ.

ວັນທີ 6 - 8 ເມສາ 1998 ກອງປະຊຸມສຳມະນາໄດ້ໄຂຂຶ້ນ ໂດຍການເປັນປະທານຂອງ **ທ່ານ ອ່ອນເນື້ອ ພົມມະຈັນ** ກຳມະການສູນກາງພັກ ເລຂາພັກແຂວງ ເຈົ້າແຂວງໆ ຈຳປາສັກ. ໃຫ້ກຽດເຂົ້າຮ່ວມ ຍັງມີ **ທ່ານບົວບານ ວໍລະຂຸນ** ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ. **ທ່ານ ສາດສະດາຈານ ດອ ຮາຮັບ ຮຸນດິອຸສ** ທີ່ປຶກສາກິຕິມະສັກ ປະຈຳໂຄງການໃບລານ **ທ່ານ ຄຳເສັງ ສູນດາລາ** ຫົວໜ້າກົມພິມຈຳໜ່າຍ ຫໍສະໝຸດ ແລະປ້າຍ, **ທ່ານນາງ ກົງເດືອນ ເນດຕະວົງ** ຫົວໜ້າໂຄງການໃບລານ, ແລະ ພາກສ່ວນທີ່ກ່ຽວຂ້ອງຈາກພະແນກຖະແຫລງຂ່າວ - ວັດທະນະທຳແຂວງ, ເມືອງ, ບັນດາພະສົງສຳມະເນນ ຕາງໜ້າແນວລາວສ້າງຊາດແຂວງ ແລະ ເມືອງ ແລະ ຈາກພາກສ່ວນທີ່ອ້ອມຂ້າງເຂົ້າຮ່ວມ 50 ກວ່າຄົນ.



ໃນພິທີເປີດ **ທ່ານ ອ່ອນເນື້ອ ພົມມະຈັນ** ໄດ້ກ່າວບາງຕອນວ່າ "ກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນໃນການປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳຂອງທ້ອງຖິ່ນກໍ່ຄືໃນທົ່ວແຂວງ. ປະຈຸບັນ ທາງຄະນະພັກ ອຳນາດການປົກຄອງ ພວມຫັນເອົາພະນັກງານລົງສູ່ຮາກຖານເພື່ອຂົບຂວາຍ ສຶກສາອົບຮົມປະຊາຊົນບັນ

➡



ດາເຜົ່າ ໃຫ້ມີແນວຄິດ ຮັກຊາດ ໃນນີ້ ທາງແຂວງ ໄດ້ເອົາໃຈໃສ່ການປົກປັກຮັກສາວັດທະນະທຳ ເຊັ່ນ : ການເກັບກຳ, ການປົກປັກຮັກສາມູນເຊື້ອວັດທະນະທຳຕ່າງໆ ຂອງທ້ອງກິ່ນ. ແຕ່ລະບ້ານແຕ່ລະເຜົ່າໄດ້ຖືບັນຫານີ້ເປັນສຳຄັນ. ການ. ທີ່ໂຄງການໄດ້ລົງມາສຳຫລວດໜັງສືໃບລານ ຍິ່ງເປັນການດີໃນການ ປະກອບສ່ວນປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳ ຂອງແຂວງ.

ທ່ານ ຢືນຢັນວ່າ : ໂຄງການນີ້ຈະດຳເນີນໄປດ້ວຍດີ ທັງຈະໄດ້ຮັບໝາກຜົນເປັນຢ່າງດີ ເພາະເປັນການຄອງຄອຍ ແລະ ເປັນ ຈຸດປະສົງຂອງ ຄະນະພັກ, ອຳນາດການປົກຄອງມາແຕ່ດົນ ເພື່ອຢາກຟື້ນຟູ ແລະ ປົກປັກຮັກສາມູນເຊື້ອວັດທະນະທຳ.

# ຄາຖາພຣະທັມມະບົດແປ

### 1.ຍະມະກະວັດ

(1) ມະໂນປຸພພັງຄະມາ ທັມມາ
ມະໂນເສຕຖາ ມະໂນມະຍາ
ມະນະສາ ເຈ ປະທຸຕເຖນະ
ກາສະຕິ ວາ ກະໂຣຕິ ວາ
ຕະໂຕ ນັງ ທຸກຂະມັນເວຕິ
ຈັກກັງວະ ວະຫະໂຕ ປະທັງ ໆ-1

ທັມທັງຫລາຍມີໃຈເປັນຫົວໜ້າ ມີໃຈເປັນໃຫຍ່ ສຳເຣັດແລ້ວຍ້ອນໃຈ ຖ້າບຸຄຄົນມີໃຈຊົ່ວແລ້ວ ພວມເວົ້າຢູ່ກໍຕາມ ພວມເຮັດຢູ່ກໍຊາງ(ກໍຊົ່ວ) ຍ້ອນຄວາມຊົ່ວນັ້ນ ຄວາມທຸກຍ່ອມນຳບຸກຄົນຜູ້ນັ້ນໄປດ້ານດັ່ງຕີນກວຽນລໍ້ຽນນຳຮອຍງົວຕົວແກ່ກວຽນໄປຢູ່ສະນັ້ນ

Mind is the fore-runner of (all evil) conditions. Mind is chief; and they are mind-made. If, with an impure mind, one speaks or acts, then pain follows one even as the whell, the hoof of the ox.

## ເຊີນອ່ານ

| | ໜ້າ |
|---|---|
| ○ ກອງປະຊຸມຢູ່ແຂວງຈຳປາສັກ | 1 |
| ○ ຄາຖາພະທັມມະບົດແປ | 2 |
| ○ ລຳປາໃສຂອງທ່ານອ່ອນເນື້ອ.... | 3 |
| ○ ລຳເທັນຂອງ ພະອາຈານ ຊຸວັນ..... | 5 |
| ○ ມອບທຶນສຶກສາສົງ........ | 6 |
| ○ ນິງຄະອະສູດແປ...... | 7 |
| ○ ເປັນນັກຈານ.......... | 8 |
| ○ ສຳພາດຜູ້ແທນ...... | 9 |
| ○ ຍານເດອກໄພ້ບານທີ່ເມືອງຍອດອູ | 12 |
| ○ ແສງສະຫວ່າງ.......... | 13 |
| ○ ຮັກສາໃບລານ......... | 17 |
| ○ ການສຳຫລວດໃບລານ | 18 |
| ○ ສຸພາສິດບູຮານ | 20 |

## ຄຳປາໄສຂອງ ທ່ານ ອ່ອນເນື້ອ ພົມມະຈັນ

*ກ່າວໃນກອງປະຊຸມໃບລານ ຄັ້ງວັນທີ 8/4/98 ແຂວງ ຈຳປາສັກ.*



ກອງ ປະຊຸມສຳມະນາກ່ຽວກັບການປົກປັກຮັກສາຫນັງສືໃບລານ ທີ່ເປີດຂຶ້ນໃນຄັ້ງນີ້ ໄດ້ຮັບຜົນສຳເລັດອັນຈົບງາມ ຍ້ອນຫມົດທຸກພາກສ່ວນ ທີ່ເປັນຕົວແທນເຂົ້າຮ່ວມກອງປະຊຸມ ໄດ້ປະກອບຄຳຄິດຄຳເຫັນ ແບບກົງໄປກົງມາ ແລະ ມີເນື້ອໃນທີ່ເລິກເຊິ່ງ. ສະຫລຸບແລ້ວ ກອງປະຊຸມເປັນເອກະພາບກັນ ແລະ ເຫັນໄດ້ຄວາມຫມາຍສຳຄັນຂອງວຽກງານປົກປັກຮັກສາຫນັງສືໃບລານ ຈະພ້ອມກັນນຳເອົາເນື້ອໃນຈິດໃຈຂອງກອງປະຊຸມນີ້ ນຳໄປຜັນຂະຫຍາຍໃຫ້ເກີດດອກອອກຜົນ ຢູ່ໃນພຶດຕິກຳຕົວຈິງແຕ່ລະທ້ອງຖິ່ນຮາກຖານ ຈະໄດ້ນຳພາປະຊາຊົນບັນດາເຜົ່າທັງຫມົດ ເຮັດຫນ້າທີ່ເກັບກຳ ແລະ ປົກປັກຮັກສາຫນັງສືໃບລານ ທຸກຄົນຄົງຈະຮັບຮູ້ວ່າ ຄວາມຫມາຍຄວາມສຳຄັນຂອງຫນັງສືໃບລານນີ້ ເປັນຫນັງສືທີ່ບັນພະບູລຸດລາວ ໄດ້ປະໄວ້ເປັນມູນມໍລະດົກອັນລ້ຳຄ່າຂອງລາວ ມີຄວາມຫມາຍສຳຄັນໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ. ດັ່ງທີ່ທຸກຄົນຮູ້ນຳກັນ ໃນມະຕິກອງປະຊຸມຂອງພັກ ຕ່າງກໍ່ໄດ້ເນັ້ນຫນັກກ່ຽວກັບການພັດທະນາປະເທດຊາດ ໃນນັ້ນເພິ່ນກໍ່ໄດ້ມີແຜນກຳນົດການພັດທະນາເສດຖະກິດ, ວັດທະນະທຳສັງຄົມ. ເອົາການພັດທະນາວັດທະນະທຳ-ສັງຄົມໃຫ້ໄປຄຽງຄູ່ກັບການພັດທະນາເສດຖະກິດ ຫມາຍວ່າເສດຖະກິດຂະຫຍາຍຕົວເທົ່າໃດ ຕ້ອງໃຫ້ການຂະຫຍາຍຕົວທາງວັດທະນະທຳ-ສັງຄົມຂະຫຍາຍຕົວໄປເທົ່າກັນ. ທັງນີ້ ແມ່ນເພື່ອຕອບສະຫນອງຊີວິດການເປັນຢູ່ ໃຫ້ໄດ້ທາງດ້ານວັດຖຸ ແລະ ຈິດໃຈ ເຮັດໃຫ້ປະຊາຊົນມີຢູ່ມີກິນ, ມີວິທະຍາສາດ ແລະເຮັດແນວໃດ ຈິດໃຈກໍ່ຕ້ອງສີວິໄລໄປຄຽງຄູ່ກັນ. ສະນັ້ນ ເມື່ອເຫັນໄດ້ຄວາມຫມາຍສຳຄັນຂອງການພັດທະນາເສດຖະກິດ ແລະ ວັດທະນະທຳສັງຄົມ ກໍ່ຍິ່ງຕ້ອງໄດ້ຄິດເຖິງການປົກປັກຮັກສາ ທີ່ເອີ້ນວ່າ " ມູນເຊື້ອວັດທະນະທຳຂອງຊາດ" ວຽກງານປົກປັກຮັກສາ ແລະ ເສີມຂະຫຍາຍ ທາງດ້ານວັດທະນະທຳນີ້ ແມ່ນນຶ່ງຂອງວຽກງານທັງຫມົດ ທີ່ປະກອບເຂົ້າໃນການພັດທະນາຄົນ, ພັດທະນາຊັບພະຍາກອນມະນຸດໃຫ້ທຸກຄົນມີຄວາມສີວິໄລທາງຈິດໃຈ, ວັດທະນະທຳເວົ້າລວມ ເວົ້າສະເພາະ ການປົກປັກຮັກສາຫນັງສືໃບລານ ແມ່ນເປັນນຶ່ງຂອງບັນຫາ ໃນການປົກປັກຮັກສາທາງດ້ານວັດທະນະທຳ ມີຄວາມຫມາຍສຳຄັນທີ່ສຸດ. ຫນັງສືໃບລານປະກອບດ້ວຍຫລາຍບັນຫາ ເກືອບວ່າມັນເປັນລະບົບນຶ່ງ ທີ່ຄົບຊຸດຜັສມຄວບ ເພື່ອຮັບໃຊ້ການສ້າງສາພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນຮັບໃຊ້ການພັດທະນາຊັບພະຍາກອນມະນຸດ ຫມາຍວ່າ ຮັບໃຊ້ເຂົ້າໃນການພັດທະນາຄົນ, ການສຶກສາອົບຮົມຄົນ ແຕ່ລະຮຸ່ນໃຫ້ມີຄວາມເປັນປະຊາທິປະ



ໄຕ. ໜັງສືໃບລານມີເນື້ອໃນອຸດົມສົມບູນ ເພື່ອຮັບໃຊ້ເຂົ້າໃນການສຶກສາອົບຮົມຄົນ. ສະນັ້ນ ທຸກຄົນຫາກຮູ້ເກັບກຳ, ຮັກສາ, ກອດເອົາເນື້ອໃນຕ່າງໆໃນໜັງສື ຈະກາຍເປັນເນື້ອໃນທີ່ອຸດົມສົມບູນແກ່ຄົນ ສຶກສາໃຫ້ຄົນມີສິນທຳ ອະຣິຍະທຳ ຄຳສັ່ງສອນຂອງພະພຸດທະເຈົ້າທັງ 8 ໝື່ນສີ່ພັນພະທັມະຂັນ, ປູ່ສອນຫລານ, ຫລານສອນປູ່ ແລະ ອື່ນໆ ລ້ວນແຕ່ມີຢູ່ນຳໃບລານ. ຄົນເຮົາຍຸກນີ້ ແມ່ນນອນຢູ່ໃນຍຸກພັດທະນາປະເທດຊາດ ດ້ວຍການນຳໃຊ້ກົນໄກເສດຖະກິດຕະຫລາດ. ດ້ານຕັ້ງໜ້າຂອງການຕະຫລາດ ແມ່ນແນໃສ່ຂະຫຍາຍເສດຖະກິດ ພ້ອມກັບນັ້ນເສດຖະກິດຕະຫລາດ ກໍ່ມີດ້ານຫຍໍ້ທໍ້ເຮັດໃຫ້ຄົນສ່ວນຫລາຍເຫັນແກ່ໂຕ ຈິດໃຈນັບມື້ຕ່ຳລົງ ເຮັດໃຫ້ມູນເຊື້ອອັນດີງາມຂອງລາວ ບໍ່ວ່າຄວາມສາມັກຄີເອື້ອເຟື້ອເຜື່ອແຜ່ ທີ່ປະຊາຊົນລາວເຄີຍມີ ຄ່ອຍໆໝົດໄປ ສະນັ້ນ ກ້າເຮົາບໍ່ຄົ້ນເອົາຄຳພີ, ຄຳສັ່ງສອນ ຂອງພະພຸດທະເຈົ້າ,



ຄຳສຸພາສິດບູຮານມາສຶກສາຄົນຍຸກນີ້ແລ້ວ ຈິດໃຈຂອງຄົນຈະບໍ່ມີຄວາມສີວິໄລໄດ້.

ກອງປະຊຸມຄັ້ງນີ້ ໄດ້ເວົ້າເຖິງການປົກປັກຮັກສາໜັງສືໃບລານ ເນື້ອແທ້ແມ່ນປົກປັກຮັກສາ ແລະ ເອົາມານຳໃຊ້ ສິ່ງທີ່ມີຢູ່ ຄຳສັ່ງສອນເອົາມາຄົ້ນຄວ້ານຳໃຊ້ໃຫ້ສອດຄ່ອງກັບສະພາວະຄວາມເປັນຈິງ, ສອດຄ່ອງກັບແນວທາງນະໂຍບາຍຂອງ ພັກ-ລັດ ນຳໃຊ້ເຂົ້າໃນການສຶກສາຄົນຍຸກນີ້ ໃຫ້ມີຈິດໃຈຮັກບ້ານເກີດເມືອງນອນ ເອື້ອເຟື້ອເຜື່ອແຜ່, ມີສິນທຳປະຈຳໃຈ, ຮັກສາໄດ້ມູນເຊື້ອວັດທະນະທຳອັນດີງາມຂອງລາວ **ມີແຕ່ປົກປັກຮັກສາວັດທະນະທຳຂອງຊາດໄວ້ເທົ່ານັ້ນ ຈຶ່ງຈະຮັກສາຄວາມເປັນຊາດລາວໄວ້ໄດ້ຊົ່ວຟ້າດິນສະຫລາຍ.** ວັດທະນະທຳຊີ້ບອກເຖິງຊາດ. ສະນັ້ນ ຮັກຊາດ ຕ້ອງຮັກສາວັດທະນະທຳ, ຮັກສາຄົນ, ຮັກສາຊັບສົມບັດຂອງຊາດ ໃນນັ້ນ ວັດຖຸທີ່ມີຄ່າທີ່ສຸດແມ່ນຄົນ ເຮັດຈັ່ງໃດ ໃຫ້ຄົນມີຈິດໃຈສີວິໄລ. ສະນັ້ນ ຈຸດປະສົງຂອງການຕັ້ງກອງປະຊຸມເທື່ອນີ້ ແມ່ນເພື່ອພັດທະນາຈິດໃຈຂອງຄົນ.



ຢາກໃຫ້ປະເທດຊາດຈະເລີນທາງວັດຖຸ ແລະ ຈິດໃຈ ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄົນຢູ່ເຢັນເປັນສຸກ ພະພຸດທະເຈົ້າໄດ້ຕັດສອນໄວ້ວ່າ: ຄົນເຮົາມີຄວາມສະຫງົບ ມີຢູ່ມີກິນແລ້ວ ແມ່ນມີຄວາມສະຫງົບ. ແຕ່ຍັງບໍ່ທັນສະຫງົບໄດ້ ກ້າວ່າຄົນຍັງມີກິເລດຕັນຫາ, ມີຄວາມຢາກເກີນຂອບເຂດ ຄວາມທຸກກໍ່ເກີດຂຶ້ນ ເຮັດໃຫ້ຈິດໃຈເສົ້າໝອງ ພາໄປເຖິງບ່ອນເຮັດສິ່ງທີ່ບໍ່ດີໃນສັງຄົມ ເຮັດໃຫ້ສັງຄົມບໍ່ສະຫງົບ. **ແຕ່ກ້າວ່າ ຈິດໃຈຂອງຄົນເຫລື້ອມໃສມີຈິດໃຈສູງ ສົມເປັນມະນຸດແລ້ວ ຄົນເຮົາກໍ່ບໍ່ເຮັດສິ່ງທີ່ບໍ່ດີ. ວັດທະນະທຳລາວແມ່ນວັດທະນະທຳທີ່ດີງາມທີ່ທົ່ວໂລກຍອມຮັບ.**



## ຄຳເຫັນຂອງ ພະອາຈານສຸວັນ ຈັນທະລາດ

ປະທານ ອ.ພ.ສ ແຂວງ ຈຳປາສັກ



ອາດຕະມາໄດ້ຮັບ ອາລາດທະນານິມົນ ເຂົ້າຮ່ວມກອງປະຊຸມສຳມະນາໜັງສືຜູກໃບລານຄັ້ງນີ້ ມີຄວາມພາກພູມໃຈທີ່ສຸດ ເປັນຂີດໝາຍທາງປະຫວັດສາດ ທີ່ທາງໂຄງການໄດ້ລົງມາເປີດກອງປະຊຸມຂຶ້ນຢ່າງກ້ວາງຂວາງ ມີຕົວແທນພະສົງຈາກ 10 ຕົວເມືອງເຂົ້າຮ່ວມ ແລະ ທາງວັດທະນະທຳແນວໂຮມ ພ້ອມດ້ວຍແຂກທີ່ກ່ຽວຂ້ອງກໍ່ເຂົ້າຮ່ວມຢ່າງຫລວງຫລາຍ ເຮັດໃຫ້ກອງປະຊຸມລົງເກີງຮາກຖານຢູ່ແຕ່ລະວັດໃນທົ່ວແຂວງ ມີຄວາມເຂົ້າໃຈຕໍ່ເນື້ອໃນຈິດໃຈຂອງໜັງສືຜູກໃບລານ ຢູ່ທົ່ວແຂວງນີ້ ມີ 552 ວັດ ພະທຳຄຳສັ່ງສອນຂອງພະພຸດທະເຈົ້າມີເຖິງ 84.000 (ແປດໝື່ນສີ່ພັນ) ພະທຳມະຂັນ ທີ່ບັນພະບູລຸດລາວໄດ້ບັນທຶກໄວ້ໃສ່ຫີນ, ໃສ່ໄມ້, ໃສ່ເຈັ້ຽສາ, ໃສ່ໃບລານກໍ່ມີ ໄດ້ປະປ່ອຍໄວ້ຕາມທຳມະຊາດ ຢູ່ຕາມຫໍວັດຕ່າງໆ. ຈະເຮັດແນວໃດ ເພື່ອໃຫ້ມວນມະນຸດໄດ້ຊອກຄົ້ນຂອງດີ ຢູ່ໃນໃບລານນັ້ນອອກມາຮັບໃຊ້ສັງຄົມໃນການດຳລົງວິຖີຊີວິດຂອງຄົນທັງໝົດຢູ່ໃນໂລກ ເວົ້າລວມ, ເວົ້າສະເພາະ ແມ່ນປະຊາຊົນຄົນລາວເຮົາໃຫ້ຮູ້ຈັກຂອງດີໃນໜັງສືໃບລານນັ້ນ ເພິ່ນສອນໃຫ້ພວກເຮົາຮູ້ຕົນເອງ, ຮັກຕົນເອງ, ຮັກສັງຄົມ ແລະ ປະເທດຊາດ ຮູ້ອະຣິຍະທຳຂະນົບທຳນຽມ ວັດທະນະທຳຂອງຊາດລາວ ທີ່ໄດ້ບົ່ງບອກຢູ່ໃນຄຳພີໃບລານ ອັນມີຫລາຍຮູບຫລາຍສີ ໃນທຸກການເຄື່ອນໄຫວຂອງຄົນເຮົາສະໄຫມກ່ອນ.

ສະນັ້ນອາດຕະມາ ຕາງໜ້າໃຫ້ຄະນະ ອ.ພ.ສ. ແຂວງ ຈຶ່ງມີຄວາມພູມໃຈຫລາຍທີ່ສຸດ ຕໍ່ໂຄງການປົກປັກຮັກສາໜັງສືໃບລານລາວທີ່ໄດ້ມີການເຄື່ອນໄຫວຢ່າງເອົາຈິງເອົາຈັງ. ອາດຕະມາ ສະເໜີໃຫ້ທາງໜ່ວຍສຳຫລວດລົງປະຕິບັດຕົວຈິງຢູ່ທີ່ແຂວງນີ້ໂດຍດ່ວນ ເພື່ອຍາດແຍ່ງຈາກການຕົກເຮ່ຍເສັຽຫາຍອື່ນໆ. ທ້າຍສຸດນີ້ ຂໍໃຫ້ກອງປະຊຸມໃບລານເທື່ອນີ້ຈົ່ງປະສົບຜົນສຳເລັດ ແລະ ຈະເລີນ.



- **ທ່ານ ມະຫາ ບຸນຍົກ ແສນສູນທອນ** ທີ່ປຶກສາຂອງໂຄງການ, ໂອ້ລົມຕໍ່ກອງປະຊຸມສຳມະນາຂັ້ນເມືອງ ທີ່ເມືອງ ປາກເຊ (ວັດທ່າຫລວງ). ຄັ້ງວັນທີ 5 ມີນາ 2000 ໃນພາບ :
- **ທ່ານ ຈັນທະພິລິດ ຈຽມສີສຸລາດ** ຫົວໜ້າກົມພິມ ຈຳໜ່າຍ ແລະ ຫໍສະໝຸດ (ຜູ້ທີ່ສາມຈາກຊ້າຍ) ແລະ
- **ທ່ານ ນາງກິ່ງເດືອນ ເນດຕະວົງ** ຫົວໜ້າໂຄງການປົກປັກຮັກສາໃບລານ (ຂວາສຸດ) ກໍເຂົ້າຮ່ວມສະແດງຄວາມຄິດເຫັນນຳ.

# ມອບເງິນຊຸກຍູ້ ການສຶກສາສົງ ທີ່ແຂວງຈຳປາສັກ

ໂດຍ : ບຸນເລີດ ທຳມະຈັກ

ໃນ ໂອກາດທີ່ຫນ່ວຍສຳຫລວດຂອງພວກເຮົາໄດ້ລົງເຄື່ອນໄຫວຂຶ້ນບັນຊີໃບລານ ຢູ່ແຂວງຈຳປາສັກ ໃນທ້າຍປີ 1998 ແລະ ຕົ້ນປີ 1999 ຄະນະສຳຫລວດໄດ້ທຳການເຄື່ອນໄຫວຢູ່ເຂດເມືອງຈຳປາສັກ ແລະ ສຸຂຸມາ ແລະ ກໍ່ໄດ້ຈັດພິທີສຳມະນາຂັ້ນເມືອງ ໃນເຂດເມືອງດັ່ງກ່າວອີກເທື່ອນຶ່ງ ຢູ່ວັດພຸທວະນາຣາມ ບ້ານ ເມືອງກາງ ຫ່າງຈາກຕົວເມືອງຈຳປາສັກປະມານ 10 ກວ່າຫລັກ. ວັດບ້ານເມືອງກາງເປັນຈຸດຫນຶ່ງທີ່ມີເອກະສານໃບລານຫລາຍ ເກືອບ 5000 ກວ່າຜູກ ເປັນວັດເກົ່າແກ່ ແລະ ຈົບງາມ ມີຫໍໄຕທີ່ໄວ້ຄຳພີໃບລານ ທີ່ສ້າງຂຶ້ນມາໄດ້ເກືອບຮ້ອຍປີແລ້ວ. ໃນໂອກາດນີ້ທາງໂຄງການໄດ້ສ້າງວີດີໂອສາລະຄະດີໃບລານ ເພື່ອເຜີຍແຜ່ໃຫ້ແກ່ແຂວງພາກໃຕ້ ໄດ້ເຫັນຄວາມຫລາກຫລາຍຂອງມູນມໍລະດົກວັດທະນະທຳ ເຊິ່ງບໍ່ວ່າເຂດໃດແຂວງໃດ ແລະ ພາກໃດຂອງປະເທດ ກໍ່ມີຈຸດພິເສດ ຄືເປັນສະຖານທີ່ສຶກສາຮ່ຳຮຽນຂອງພະສົງສາມະເນນໃນສະໄຫມບູຮານ ຊຶ່ງເພີ່ນເອີ້ນກັນວ່າ " ຮຽນຫນັງສືໃຫຍ່" ຄວາມຫມາຍກໍ່ຄືຮຽນມູລະກັດຈາຍະນະ ເຊິ່ງແມ່ນເຄົ້າມູນຂອງພາສາປາລີ ມີອາຈານໃຫຍ່ຜູ້ຊົງຄຸນວຸດທີທີ່ມີຄວາມຮູ້ສາມາດແປອັກຂະລະປາລີໄດ້ ຈຶ່ງໄດ້ຕັ້ງສຳນັກຂຶ້ນເທົ່າທີ່ຄະນະສຳຫລວດໄດ້ເຫັນມານອກຈາກຈຸດໃຫຍ່ທີ່ຢູ່ແຂວງຫລວງພະບາງ ເຊັ່ນ ວັດໃຫມ່, ວັດແສນ ແລະ ວັດຊຽງທອງ ເປັນຈຸດລວມໃບລານຂອງແຂວງ. ທີ່ກຳແພງນະຄອນ ກໍ່ມີ ວັດນາໄຊ, ວັດນາຊອນ, ບ້ານຜ້າວ ນາກຸງ ເມືອງໄຊທານີ







ແລະ ນາກຸງ (ເມືອງປາກງື່ມ) ເປັນຕົ້ນ ກໍເປັນຈຸດລວມຂອງແຂວງພາກກາງທີ່ສະຫວັນນະເຂດ ມີວັດຫນອງລໍາຈັນ(ນໍ້າຈັນ), ດົງດອກໄມ້ ແລະ ຕາແຫລວ ເຊິ່ງປະຈຸບັນກໍ່ຍັງມີທ່າໄຕ ແລະ ເອກະສານຫຼວງຫລາຍ, ຄືດັ່ງວັດເມືອງກາງ ແຂວງຈໍາປາສັກນີ້ ເຊັ່ນກັນ.

ໂດຍການສືບທອດທາງດ້ານການສຶກສາຂອງພະສົງ ເມື່ອຕົກມາສະໄຫມຫລັງສົງຄາມໂລກຄັ້ງທີ່ສອງ (1945) ໂຮງຮຽນ ຫລື ສໍານັກມູນກັດຈາຍ ກໍ່ໄດ້ກາຍມາເປັນໂຮງຮຽນປະຣິຍັດຕິທໍາ (ໂຮງຮຽນປາລີ) ແລະ ກໍ່ແມ່ນຫລັກສູດທີ່ຫຍໍ້ມາຈາກມູນເດີມແຕ່ກະທັດຮັດ ແລະ ເອີ້ນວ່າໂຮງຮຽນປາລີ (ມະຫາ) ມີຮອດປະໂຫຍກ 9 ກໍ່ຈົບ ແລະ ພັດທະນາເລື້ອຍໆມາເຊິ່ງປະຈຸບັນກໍ່ໄດ້ມີຫລັກສູດທັງຝ່າຍໂລກ ແລະ ຝ່າຍທໍາຮວມນໍາ ເພື່ອໃຫ້ຜູ້ຮຽນສໍາເລັດແລ້ວ ສາມາດປະກອບອາຊີບເຮັດວຽກງານອ້າລັດກະການໄດ້ ປະຈຸບັນໂຮງຮຽນປາລີ (ສົງ) ກໍ່ມີຢູ່ແຕ່ລະເຂດ ແລະ ທ້ອງຖິ່ນຫລາຍໆແຫ່ງ.

ດັ່ງນັ້ນ ເພື່ອປະກອບສ່ວນໃຫ້ແກ່ ການສຶກສາສົງດັ່ງກ່າວ ແຕ່ລະປີທີ່ມີ ການຈັດສໍາມະນາໃນເຂດໃດແຂວງໃດ ໂຄງການພວກເຮົາກໍ່ໄດ້ມອບທຶນອຸດຫນູນໃຫ້ແກ່ໂຮງຮຽນສົງດັ່ງກ່າວ ເພື່ອນໍາໃຊ້ຄ່າພິມຫລັກສູດ, ຄ່າອຸປະກອນການສອນ, ຄ່າຄູສອນພິເສດ ທີ່ໄດ້ລົງເລິກດ້ານອັກສອນທໍາ, ວັນນະຄະດີລາວ ແລະ ທໍາມະວິໄນ ທີ່ເຫັນວ່າໄດ້ລົດລະໄປຫລາຍແລ້ວ ເພື່ອຟື້ນຟູວັດທະນະທໍາ ແລະ ວັນນະຄະດີລາວ ໃຫ້ນັກຮຽນນັກສຶກສາ ໄດ້ຮູ້ຄຸນຄ່າຊາດຂອງຕົນດີຂຶ້ນ.

ທີ່ໂຮງຮຽນສົງແຂວງຈໍາປາສັກ ຄະນະໂຄງການໄດ້ມອບທຶນຈໍານວນ 6.700.000 ກີບ (ທັງ 2 ງວດ) ເພື່ອນໍາໃຊ້ເຂົ້າໃນການຊຸກຍູ້ການສຶກສາສົງ ແຂວງຈໍາປາສັກໃນສົກ ປີ 1998 - 1999.

## ມັງຄະລະສູດ ແປ : ເປັນຄໍາກອນລາວ

### ຫລັກສູດແຫ່ງຄວາມຈະເຣີນ 38 ປະການ

ຈານອິນທ໌

ເອວັນເມ ສຸຕັງ ເອກັງ ສະມະຍັງ ພະຄະວາ ສາວັດຖີຍັງ ວິຫະຣະຕິ ເຊຕະວະເນ
ອະນາຖະປິນທິກັສສະ ອາຣາເມ ງລງ ຂ້າພະເຈົ້າ ພຣະອານົນທະເຖຣະ ໄດ້ຟັງມາແລ້ວດັ່ງນີ້ :

1. ສະມັຍນຶ່ງຜູ້- ເຜີ່ງພາກສັບພັນຍູ
   ເມົາຈົ່ມສາວັດກີ ອາຊຫານີກວ້າງ
   ເຊຕະວັນຫ້ອງ ອາຣາມເຮືອງຮຸ່ງ
   ອະນາຖະປິນທິກະທ່ານສ້າງ ກວາຍພ້ອມພໍ່າສົງ.
2. ຄືນນຶ່ງ ເທພທ່ອນໄທ້ ໂຮ້ຊີ່ຜາກົດ
   ແຍງຍັງວັດ ສາດສມີແສງເຫລື້ອມ
   ອາຣາມເຮືອງ ມາຍມີວທຸກທີ່
   ເຂົ້າຈົ່ມໃກ້ ຈອມເຈົ້າເຈື່ອງທັມ.
3. ຢືນຄ່ຽມຄ້ອມ ກົ້ມເກດກອນກວາຍ
   ກອຍກົດເກືງ ທີ່ຄວນຢືນຍັ້ງ
   ວາຈາຈ້ອຍ ທູນຂໍວະໂຮກາດ
   ແລ້ວກລ່າວຂໍ້ ທູນໄທ້ທີ່ຢໍາ.

# ເປັນນັກຈານ

## ທັງເປັນ ນັກອະນຸລັກລຳພີໃບລານ

ໂດຍ : ໄພວົງ



ໜ່ວຍສຳຫລວດເດີນທາງໄປຮອດເມືອງປະທຸມພອນ ກໍ່ໄດ້ຍິນຊື່ສຽງກຽດຕິສັກເລື່ອງລືຂອງເພິ່ນ. ໃຜໆກໍ່ເວົ້າເປັນສຽງດຽວກັນວ່າ ເພິ່ນເປັນນັກຂຽນໜັງສືໃບລານມາຕະຫລອດ ພ້ອມທັງເປັນນັກປົກປັກຮັກສາທີ່ຍອດຢ້ຽມ ນັ້ນຄື ພະອາຈານຄຣູຍູ່ ພົມມະສອນ ອາຍຸ 75 ປີ ບວດໄດ້ 53 ພັນສາ ທັງເປັນປະທານ ອ.ພ.ສ. ເມືອງ. ພະອາຈານເປັນທີ່ເຄົາລົບບູຊາຂອງພະສົງອົງຄະເຈົ້າ ແລະ ປະຊາຊົນຊາວເມືອງປະທຸມພອນຕະຫລອດມາ.

ຂ້າພະເຈົ້າ ໄດ້ມີໂອກາດ ໄປນະມັດສະການພະອາຈານ, ເພິ່ນເປັນຄົນເວົ້າໜ້ອຍ ແຕ່ເຮັດຫລາຍ. ເພິ່ນເວົ້າວ່າ: "ຜ່ານມາໃນປີ 1966 - 1967 ເກີດເສິກສົງຄາມຢູ່ເລື້ອຍໆ ອາດຕະມາໄດ້ເວົ້າກັບພະສົງວ່າ ເຮົາຕ້ອງແບ່ງປັນກັນຮັກສາໜັງສືຜູ້ລະ 10 ມັດ ຫາ 20 ມັດ ເພາະວ່າ **ບາຂອງສຳມະນະ ແມ່ນຕ້ອງອາໄສໜັງສືຜູກໃບລານ.** ຄວາມຮູ້ກໍ່ອອກຈາກໜັງສືໃບລານ ເປັນທິດເປັນຈານ ແລະ ເປັນຊຽງ ລ້ວນແລ້ວແຕ່ຜ່ານພະທັມຄຳສອນຈາກໃບລານນີ້ລະ. ໃນທີ່ສຸດກໍ່ໄດ້ແຕກເສິກອອກໄປລີ້ຢູ່ປ່າ. ກ່ອນອື່ນໝົດ ອາດຕະມາກໍ່ເອົາຄຳພີໃບລານນີ້ລະກ່ອນໝູ່ ກ່ອນສິ່ງອື່ນ. ໄປລີ້ຢູ່ໃສກໍ່ຫອບໄປນຳ ຈົນເສິກສະຫງົບລົງຈຶ່ງໄດ້ນຳເອົາມາໄວ້ຕູ້ຄຳພີຢູ່ເດີມ."

ເພິ່ນຍັງເວົ້າຕື່ມວ່າ : " ການຈານຂຽນກໍ່ຂຽນ ມາຕະຫລອດ ກູ້ຍາດໂຍມເອົາຢາກສ້າງເພື່ອເຮັດບຸນ ກໍ່ຂຽນໃຫ້ເອົາ ກູ້າເລື່ອງໃດບໍ່ມີຢູ່ວັດ ກໍ່ເອົາຈາກວັດອື່ນມາກ່າຍແລ້ວກໍ່ສົ່ງເພິ່ນຄືນ. ເມື່ອຕ້ອງການເທດກໍ່ສະບາຍບໍ່ຕ້ອງໄປຢືມວັດອື່ນ".

ສຸດທ້າຍ ພະອາຈານເວົ້າວ່າ : " ໂຄງການໃບລານ ແມ່ນໂຄງການເຮັດແທ້ທຳຈິງ ສັດຊື່ບໍລິສຸດ. ແຕ່ກ່ອນອາດຕະມາຄິດວ່າ ອະນາໄມອັ້ນບັບຊິແລ້ວ ທາງໂຄງການຈະເອົາເມືອໄວ້ວຽງຈັນ. ອາດຕະມາຕົກໃຈ ແລະ ສົງໄສ ສຸດທ້າຍອາດຕະມາເຂົ້າໃຈດີ. ຂໍຍ້ອງຍໍຊົມເຊີຍດ້ວຍຄວາມຈິງໃຈມາຍັງກະຊວງວັດທະນະທຳ ແລະ ໂຄງການໃບລານລາວ ອາດຕະມາຈະທຳໜ້າທີ່ປົກປັກຮັກສາໄວ້ໃຫ້ດີທີ່ສຸດ ເພື່ອລູກເພື່ອຫລານຕໍ່ໄປ".

---

ພະຕູ ເທວາ ມະນຸສສາ ຈະ ມັງຄະລານີ ອະຈິນຕະຍຸງ
ອາກັງຂະມານາ ໂສຕຸກາມັງ ພອູທີ ມັງຄະລະມຸດຕະມັງ.

4. ປັດນີ້ ຫວຍເທພພ້ອມ — ມະນຸດທົ່ວຈັກກະວານ
ຫວັງມຸງຄຸນ — ທີ່ມທົ່ວທາຍຮ້ອນ
ຈົນດາກ້ອນ — ກຽງການສິບສອງຂວບ ມາແລ້ວ
ອໍພອະໄອກະອູບແກ້ວ — ທັມແທ້ທີ່ອຸດົມ ແດ່ກ້ອນ.
5. ເມື່ອນັ້ນ ຈອມເຈື່ອງເຈົ້າ — ເຜີຍໂອດກຸແລງສານ
ເຮົາຈັກໄຂມຸງຄຸນ — ຈື່ຈຳຈົງກ້ວນ
ອຸດົມດີລ້ວນ — ປະມວນມາສາມສິບແປດ ປະການເປີ
ເຊີນເທພເຈົ້າ — ຈົງແຈ້ງແຈ່ມໃຈ ທ່ຽວເກັ້ນ.

ອະເສວະນາ ຈະ ພາລານັງ ບັນທິຕານັນຈະ ເສວະນາ
ປູຊາ ຈະ ປູຊະນີຍານັງ ເອຕັມມັງຄະລະມຸດຕະມັງ.

6 ບໍ່ເສບສ້ອງ — ເປັນສ່ຽວຊຸມພານ
ຫວນຫາຄົບ — ປອາດປວງຜຍາລ້ຳ
ບູຊາຜູ້- — ປູຊະນີເປືອງນ້ຳ
ສາມນີ້ ມັງຄະເລດອ້ — ທັມແທ້ທີ່ອຸດົມ ທ່ານເອີຍ.

ປະຕິອູປະເທສະວາໂສ ຈະ ປຸພເພ ຈະ ກະຕະປຸນຍະຕາ
ອັຕຕະສັມມາປະນິທິ ຈະ ເອຕັມມັງຄະລະມຸດຕະມັງ

ອ່ານຕໍ່ໜ້າ 14

# ສຳພາດຜູ້ແທນ

## ກອງປະຊຸມປົກປັກຮັກສາໃບລານທີ່ແຂວງຈຳປາສັກ (ທີ 6-8 ເມສາ 1998)



**ທ່ານ ຄຳສິງ ບຸດສີທັບດອນ**
**ຫ້ອງການແນວລາວສ້າງຊາດແຂວງ**

"ຂ້າພະເຈົ້າຮູ້ສຶກມີກຽດອັນສູງສົ່ງ ທີ່ໄດ້ເຂົ້າຮ່ວມຮັບຟັງວິທີວິທະຍາໃນການປົກປັກຮັກສາໜັງສືຜູກໃບລານ ມັນສຸດທີ່ມີຄວາມໝາຍສຳຄັນ. ການປົກປັກຮັກສາໜັງສືໃບລານລາວ ກໍ່ແມ່ນການປົກປັກຮັກສາຮີດຄອງວັດທະນະທຳຂອງລາວ ຊຶ່ງເຮັດໃຫ້ຂ້າພະເຈົ້າມີຄວາມພາກພູມໃຈ ເພື່ອສືບຕໍ່ເຄື່ອນໄຫວກວດກາ ແລະ ຂຶ້ນບັນຊີ ໃຫ້ໄດ້ຕາມແຜນການຂອງເຈົ້າຂອງໂຄງການ. ກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນຍິ່ງ ເພາະໄດ້ເຕົ້າໂຮມກຳລັງແຮງຄວາມສາມັກຄີສັງຮວມຮອບດ້ານ ຂອງອຳນາດການປົກຄອງຂັ້ນພື້ນຖານຈົນຂຶ້ນຮອດຂັ້ນສູນກາງຕະຫລອດຮອດພະສົງສຳມະເນນ ແຕ່ຂັ້ນພື້ນຖານຮອດ ອ.ພ.ສ. ແຂວງ ໃນນັ້ນ ກໍ່ເພື່ອປຸກລະດົມປະຊາຊົນເຂົ້າຮ່ວມໃນການປົກປັກຮັກສາໜັງສືຜູກໃບລານລາວ ທີ່ແມ່ນກົກຮາກຂອງວັດທະນະທຳລາວ ສືບທອດມາແຕ່ບູຮານະການ. ເມື່ອມີການສຳຫລວດຕົວຈິງ ພາກສ່ວນແນວໂຮມທົ່ວແຂວງຈຳປາສັກພວກເຮົາ ຕ້ອງເປັນເຈົ້າການປະສານສົມທົບ ແລະ ໃຫ້ຄວາມຮ່ວມໄມ້ຮ່ວມມືໃນການປຸກລະດົມພາກສ່ວນຕ່າງໆ ເພື່ອປະກອບສ່ວນທາງດ້ານວັດຖຸ ແລະ ຈິດໃຈ ພ້ອມທັງແຮງງານ ເຂົ້າໃສ່ການອະນາໄມຈັດມ້ຽນໜັງສືໃຫ້ກຸ້ມຜູກ, ກຸ້ມມັດ, ກຸ້ມເລື່ອງ ແລະ ເກັບມ້ຽນໃສ່ຕູ້ຄຳພີ ເພື່ອຮັບປະກັນບໍ່ໃຫ້ຕົກເຮັ່ຍເສັຽຫາຍຄືໃນທີ່ຜ່ານມາ.

**ທ່ານ ທອງໃບ**
**ຫົວໜ້າຫ້ອງການຊາວໜຸ່ມແຂວງ**

"ຜ່ານການເຂົ້າຮ່ວມກອງປະຊຸມ ຮູ້ໄດ້ຫລາຍຂໍ້ຄິດເຫັນທີ່ມີຄວາມສຳຄັນຕໍ່ການປົກປັກຮັກສາໜັງສືໃບລານ ສະນັ້ນເວລາທີ່ທາງໂຄງການປົກປັກຮັກສາໜັງສືໃບລານຈະລົງມາຂຶ້ນທະບຽນໜັງສືໃບລານຢູ່ ແຂວງຈຳປາສັກນີ້ ພາກສ່ວນຊາວໜຸ່ມໃນທົ່ວແຂວງກໍ່ຈະໄດ້ປະກອບສ່ວນທາງເຫື່ອແຮງ ແລະ ສະຕິປັນຍາ ໂດຍລົງສົມທົບຕົວຈິງກັບພະແນກວັດທະນະທຳ, ຈະສຶກສາອົບຮົມຊາວໜຸ່ມແຕ່ລະຂັ້ນລົງສູ່ຮາກຖານໃຫ້ທົ່ວເຖິງ ໃຫ້ເຂົາເຈົ້າຮັບຮູ້ເນື້ອໃນຈິດໃຈ, ຄວາມສຳຄັນຂອງການສຳຫລວດໜັງສືຜູກໃບລານ. ໄລຍະຜ່ານມາທາງຊາວໜຸ່ມກໍ່ໄດ້ປະກອບສ່ວນຫລາຍດ້ານ ສະເພາະຢູ່ແຕ່ລະຫ້ອງກຸ່ມ, ຮາກຖານແມ່ນໄດ້ມອບໃຫ້ຊາວໜຸ່ມແຕ່ລະຂັ້ນ ສຶກສາອົບຮົມກັນໃນການປົກປັກຮັກສາວັດທະນະທຳຂອງຊາດ."

**ທ່ານ ວິໄລ ໄຊຍະລາດ**
**ອຳນວຍການວິທະຍຸແຫ່ງຊາດ ເຂດໃຕ້ເມືອງປາກເຊ**

ຂ້າພະເຈົ້າ.ມີຄວາມພູມໃຈຫລາຍທີ່ໄດ້ເຂົ້າຮ່ວມກອງປະຊຸມເພື່ອອະນຸລັກຮັກສາໜັງສືຜູກໃບລານລາວຄັ້ງນີ້. ແຕ່ກີ້ແຕ່ກ່ອນຕົນເອງກໍ່ບໍ່ທັນຮັບຮູ້ ຜ່ານການຄົ້ນຄວ້າຕົວຈິງເຫັນໄດ້ຄຸນຄ່າອັນມະຫາສານ ທີ່ບັນພະບຸລຸດໄດ້ສ້າງສົມໄວ້ ແລະ ຕໍ່ໄປນີ້ຈະເຮັດແນວໃດ ເພື່ອປົກປັກຮັກສາໃຫ້ຍືນຍົງຄູ່ກັບຊາດລາວເຮົາຕໍ່ໄປ. ແນ່ນອນຕ້ອງໄດ້ຮຽກຮ້ອງເຖິງທຸກພາກສ່ວນໃຫ້ເຫັນໄດ້ຄວາມໝາຍຄວາມສຳຄັນດັ່ງກ່າວນີ້ ໃຫ້ກວ້າງຂວາງອອກໄປອີກ.

ໃນຖານະຂ້າພະເຈົ້າຢູ່ສື່ມວນຊົນ ເປັນປາກກະບອກສຽງ ເຮັດແນວໃດ ໃຫ້ປະຊາຊົນໃນສາມສີ່ ແຂວງພາກໃຕ້ນີ້ເຫັນໄດ້ຄວາມໝາຍຄວາມສຳຄັນຕໍ່ວຽກງານດັ່ງກ່າວນີ້ຢ່າງທົ່ວເຖິງນັ້ນ ພວກເຮົາກໍ່ຈະຊອກຊ່ອງທາງ ອອກອາກາດຕໍ່ໄປເລື້ອຍໆ ດັ່ງດຽວກັບກອງປະຊຸມເທື່ອນີ້ກໍ່ໄດ້ຕິດຕາມຂ່າວຕລອດ ເພື່ອແຈ້ງຂ່າວໃຫ້ປະຊາຊົນໄດ້ຮັບຊາບນຳທຸກໄລຍະ.



**ທ່ານ ນາງ ຈູມສີ**
**ຫົວໜ້າຫ້ອງການສະຫະພັນແມ່ຍິງແຂວງ**

" ການສຳຫລວດ ແລະ ການປົກປັກຮັກສາໜັງສືໃບລານລາວ ເປັນບັນຫາທີ່ມີຄວາມໝາຍຄວາມສຳຄັນທີ່ສຸດໃນການດຳລົງຄົງຕົວຂອງສັງຄົມ ເພາະແມ່ນການດຳລົງຄົງຕົວຂອງຄົນ. ໜັງສືໃບລານລາວເປັນໜັງສືທີ່ບັນພະບູລຸດໄດ້ຈາລຶກໄວ້ເປັນມູນມໍລະດົກໃຫ້ແກ່ຄົນຮຸ່ນຫລັງໄດ້ນຳເອົາໄປໃຊ້ເຂົ້າໃນທຸກໜ້າທີ່ວຽກງານ. ສະນັ້ນ ທຸກພາກສ່ວນຈະໄດ້ຮ່ວມແຮງຮ່ວມໃຈກັບສຳຫລວດ ແລະ ປົກປັກຮັກສາໜັງສືໃບລານລາວນີ້ໄວ້ ເພື່ອເປັນມໍລະດົກໃຫ້ແກ່ຮຸ່ນລູກ-ຫລານໄດ້ສືບທອດປົກປັກຮັກສາ, ຄົ້ນຄ້ວາຮ່ຳຮຽນ ແລະ ນຳໃຊ້ ໃຫ້ຖືກຕ້ອງສອດຄ່ອງກັບສະພາບການປ່ຽນແປງໃຫມ່ຂອງສັງຄົມລາວ.

ຄຽງຄູ່ກັບການຜັນຂະຫຍາຍມະຕິ 6 ສະໄຫມທີ່ 6 ຂອງສູນກາງພັກ ກໍ່ຄືມະຕິ 10 ສະໄຫມທີ່ 3 ຂອງອົງຄະນະພັກແຂວງ ສະຫະພັນແມ່ຍິງ ໄດ້ຖືເອົາວຽກງານພັດທະນາແນວຄິດເປັນບັນຫາກົກ. ສະນັ້ນ ຜ່ານການຮ່ວມສຳມະນາຄັ້ງນີ້ ຕາງໜ້າໃຫ້ເອື້ອຍນ້ອງແມ່ຍິງບັນດາເຜົ່າ ຂໍນຳເອົາເນື້ອໃນຈິດໃຈຂອງກອງປະຊຸມ ລົງໄປສູ່ທຸກຂັ້ນນັບແຕ່ຂັ້ນແຂວງລົງຮອດຮາກຖານ ພາລະບົດບາດຂອງອົງການຈັດຕັ້ງແມ່ຍິງ ເປັນອົງການທີ່ຮັກສາຮີດຄອງປະເພນີວັດທະນະທຳທີ່ດີງາມຂອງລາວ ສະຫະພັນແມ່ຍິງຈະຕ້ອງເຂົ້າຮ່ວມໃນການປຸກລະດົມອົບຮົມ ໃຫ້ເອື້ອຍນ້ອງແມ່ຍິງທຸກພາກສ່ວນຮັບຮູ້ ແລະ ເຂົ້າໃຈ. ແມ່ຍິງເປັນຜູ້ທີ່ມັກເຮັດບຸນເຮັດທານ, ບົວລະບັດວັດວາສາສໜາ ຜ່ານມາ ແມ່ຍິງສ່ວນຫລາຍເຂົ້າໃຈວ່າວຽກງານນີ້ແມ່ນວຽກງານຂອງພະສົງອົງຄະເຈົ້າເປັນຜູ້ຮັກສາຄຳພີໃບລານ. ຢູ່ແຂວງຈຳປາສັກມີຄວາມເຊື່ອຖືຕາມຮີດຄອງປະເພນີທີ່ເຄີຍມີມາແຕ່ກ່ອນ ສິ່ງສັກກາລະບູຊາຢູ່ໃນວັດວາອາຮາມແມ່ຍິງຈັບບາຍບໍ່ໄດ້ເຊັ່ນ : ພະພຸດທະຮູບ, ຄຳພີໃບລານ ຖ້າຈະຈັບ ກໍ່ຕ້ອງໄດ້ຮັບອະນຸຍາດຈາກພະສົງ, ເຈົ້າອາວາດວັດ ເພິ່ນໄດ້ໃຫ້ສົມມາຄາລະວະກ່ອນ ຈຶ່ງໄດ້ຈັບບາຍ. ທາງໂຄງການໃບລານຈະລົງປະຕິບັດຢູ່ແຂວງນີ້ ທາງສະຫະພັນແມ່ຍິງຈະຕ້ອງມີສ່ວນຮ່ວມ, ຈັດຕັ້ງການປະຕິບັດ ລະດົມເອື້ອຍນ້ອງໃຫ້ມີສ່ວນຮ່ວມ ເປັນຕົ້ນການເຮັດອະນາໄມໃບລານກໍ່ຄົງເປັນວຽກງານທີ່ແມ່ຍິງເຮັດໄດ້.



**ທ່ານ ອາດແກ້ວ ກະເສີມສຸກ**
**ຮອງເຈົ້າເມືອງໆ ໂພນທອງ ຊີ້ນຳການປົກຄອງ**

ຂ້າພະເຈົ້າກໍ່ພາກພູມໃຈທີ່ສຸດ ທີ່ທາງພັກ ແລະ ລັດຖະບານກໍ່ຄືໂຄງການ ເພິ່ນໄດ້ໃຫ້ຄວາມອູ້ມຊູ ແລະ ມີການຟື້ນຟູຄືນກ່ຽວກັບບັນຫາໜັງສືໃບລານທີ່ເປັນຄຸນຄ່າ, ມີມູນຄ່າທາງວັດທະນະທຳຂອງຊາດ. ໃນໄລຍະຜ່ານມາ ເຮົາມາເບິ່ງຄືນແລ້ວ ການປະລະຂອງປະຊາຊົນ ແລະ ພະສົງອົງຄະເຈົ້າກໍ່ບໍ່ໄດ້ເອົາໃຈ ໃສ່ເທົ່າທີ່ຄວນ. ແນ່ນອນໃນກອງປະຊຸມເທື່ອນີ້ພວກເຮົາກໍ່ຈະໄດ້ຟື້ນຟູຄືນ ກ່ຽວກັບມໍລະດົກວັດທະນະທຳອັນນີ້ ເພາະວ່າບາງອົງເຂດກໍ່ມີຫລາຍເຊິ່ງໄດ້ເປັນບົດຮຽນອັນໜຶ່ງສືບທອດມາແຕ່ບູຮານະການ ກອງປະຊຸມເທື່ອນີ້ແມ່ນຈະເຮັດໃຫ້ຄົນເຮົາກໍ່ຄືຮຸ່ນສືບທອດ ເຫັນໄດ້ລັກສະນະຂອງຊາດເຮົາ ມັນເປັນມາແຕ່ໃສແທ້.

ເມື່ອໜ່ວຍສຳຫລວດທາກລົງມາເຖິງ ໃນຖານະຂ້າພະເຈົ້າຢູ່ໃນອຳນາດການປົກຄອງ ແມ່ນພ້ອມແລ້ວທີ່ຈະໃຫ້ຄວາມຮ່ວມໄມ້ຮ່ວມມື. ເບື້ອງປະຊາຊົນ ໃນຄວາມບໍ່ເຂົ້າໃຈ ຫລື ຄວາມຫຍຸ້ງຍາກທັງໝົດຂອງປະຊາຊົນນັ້ ແມ່ນທາງເມືອງພວກເຮົາຈະເປັນເຈົ້າການກ່ຽວກັບວິທີການໂຄສະນາອະທິບາຍ ເພື່ອເຕືອນສະຕິໃຫ້ເຂົາເຈົ້າເຂົ້າໃຈວ່າ ການມາເທື່ອນີ້ແມ່ນເຮັດຫຍັງ ມີຈຸດປະສົງຫຍັງ ສິເອົາຂອງເຮົາໄປບໍ? ຫລື ບໍ່ເອົາໄປ ອັນນັ້ນແມ່ນເປັນພາລະຂອງເມືອງເຮົາທີ່ຮັບຜິດຊອບໂດຍກົງ ໃຫ້ຄວາມຮ່ວມໄມ້ຮ່ວມມືສຸດຂັ້ນສຸດຂີດ ເພື່ອຟື້ນຟູຄືນກ່ຽວກັບບັນຫາດັ່ງກ່າວນີ້ ໃຫ້ກາຍເປັນມູນມໍລະດົກຂອງຊາດຄືນ.



**ທ່ານ ບຸນທອນ ຈວງຈັນດີ**
**ຮອງເຈົ້າເມືອງປາກເຊ**

ຂ້າພະເຈົ້າໄດ້ເຂົ້າຮ່ວມກອງປະຊຸມເທື່ອນີ້ ຈຶ່ງຄຶດເຫັນຫລັກອັນສຳຄັນ ຊັບສົມບັດຂອງຊາດ ກໍ່ວ່າເປັນການດີທີ່ສຸດ ທີ່ພວກເຮົາຈະໄດ້ອະນຸລັກຮັກສາຫນັງສືໃບລານໄວ້ ຖ້າເຮົາບໍ່ຮັກສາໄວ້ ວັດທະນະທຳເຮົາຈະເສື່ອມເສັຽ ອັນນີ້ແນວທາງທີ່ໄດ້ກຳນົດອອກແມ່ນຖືກຕ້ອງທີ່ສຸດ ເຮົາຈະໄດ້ເກັບກູ້ເອົາຊັບສົມບັດອັນລ້ຳຄ່າຂອງຊາດ ເພື່ອກຸລະບຸດລູກຫລານໃນຕໍ່ໆໄປ.

ພາຍຫລັງສຳເລັດກອງປະຊຸມນີ້ ຂ້າພະເຈົ້າໄດ້ມີແຜນໄວ້ແລ້ວ ຈະເຕົ້າໂຮມພໍ່ແມ່ປະຊາຊົນບັນດາເຜົ່າເພື່ອຊີ້ນຳ ແລະ ນຳພາທາງຫົວຫນ້າວັດທະນະທຳເມືອງພວກເຮົາ ແລະ ເປີດກອງປະຊຸມໃຫ້ເອົາເຈົ້າເຂົ້າໃຈວ່າ ຊັບສົມບັດອັນລ້ຳຄ່າຂອງປະເທດຊາດພວກເຮົານີ້ ແມ່ນນອນຢູ່ກັບວັດວາອາຮາມຕ່າງໆ ຫລື ວ່າຢູ່ກັບເຮືອນຄົນ ສ່ວນຫລວງຫລາຍກໍ່ຢູ່ນຳແຈຝາແຈເຮືອນ ແຕ່ພວກເຮົາບໍ່ຮູ້ຈັກຄຸນຄ່າຂອງມັນ ດັ່ງນັ້ນຂ້າພະເຈົ້າຈະເອົາໃຈໃສ່ຊີ້ນຳໆພາພໍ່ແມ່ປະຊາຊົນບັນດາເຜົ່າໃນເຂດເມືອງຂອງຂ້າພະເຈົ້າ.



**ທ່ານ ຈານສັງ ກຸແກ້ວມະນີວົງ**
**ຫ້ອງການແນວລາວສ້າງຊາດ ເມືອງປາກເຊ**

ທາງຫ້ອງການແນວລາວສ້າງຊາດ ເມືອງປາກເຊ ພວກເຮົາກໍໄດ້ເອົາໃສ່ໃຈກ່ຽວກັບວັດວາສາສະຫນາ ໂດຍສະເພາະໄດ້ສົມທົບຜົວພັນກັບອົງການທີ່ກ່ຽວຂ້ອງ ເອີ້ນວ່າອົງການທີ່ເປັນພາຄີ, ອັນຫນຶ່ງ, ອັນສອງໄດ້ສົມທົບກັບອາຈານ ອ.ພ.ສ. ແຂວງກໍ່ຄື ອ.ພ.ສ. ເມືອງ ເພື່ອລົງມາເກັບກຳ ຕາມສະຖານທີ່ ແລະ ວັດວາອາຮາມຕ່າງໆ ຕໍ່ຫນັງສືດັ່ງກ່າວນີ້ຜ່ານມາກໍ່ມີອັນຕະກະເຮັ່ຽເສັຽຫາຍຫລາຍ ແລະ ມາຮອດປະຈຸບັນນີ້ ແຜນການຂອງພັກຂອງລັດເຮົາໄດ້ເຮັດດີແລ້ວ. ທາງຂ້າພະເຈົ້າກໍ່ພາກພູມໃຈເຫລືອທີ່ສຸດ ກ່ຽວກັບເລື່ອງເກັບມ້ຽນຫນັງສືໃບລານລາວເຮົານີ້ ເພື່ອສືບທອດໃຫ້ແກ່ກຸລະບຸດໃນອະນາຄົດອ້າງຫນ້າຂອງຊາດ. ຖ້າເຮົາບໍ່ເຮັດໄດ້ຄືຈັ່ງຊີ້ ຫມາຍວ່າຫນັງສືໃບລານພວກເຮົາອາດສູນເສັຽໄປ.

ເມື່ອມີໂຄງການປົກປັກຮັກສາຫນັງສືໃບລານລາວ ໂດຍການຮ່ວມມືຂອງລັດຖະບານລາວ - ເຢຍຣະມັນ ໄດ້ລົງມາຮອດ ພວກເຮົາກໍ່ຈະໄດ້ສົມທົບທຸກຄວາມສາມາດ ໃຫ້ອັ້ມູນ ໂດຍສະເພາະໃນເມືອງພວກເຮົາມີ 34 ວັດ. ໃນນັ້ນມີ 6 - 7 ວັດເທົ່ານັ້ນ ທີ່ມີຫນັງສືຫລາຍ. ຈັ່ງຊັ້ນ ຜ່ານມາພວກເຮົາກໍ່ໄດ້ສົມທົບກັບກະແຫລງຂ່າວຂອງເມືອງລົງເກັບກຳ ຈຶ່ງໄດ້ຕົວເລກມາພໍສົມຄວນ.



**ທ່ານ ສຸປັນ**
**ຮອງປະທານແນວລາວສ້າງຊາດ ເມືອງໂພນທອງ**

ກອງປະຊຸມເທື່ອນີ້ ຂ້າພະເຈົ້າມີຄວາມປາບປື້ມທີ່ສຸດ ຍ້ອນວ່າ ຜ່ານມາບໍ່ເຄີຍມີໂຄງການທີ່ມາເວົ້າເລື່ອງປົກປັກຮັກສາຫນັງສືໃບລານ ມາປັດຈຸບັນນີ້ ເຮົາຮັບຮູ້ໄດ້ຍ້ອນການຄົ້ນຄ້ວາ ແລະ ເຈາະຈີ້ມຂອງກອງປະຊຸມ ແລະ ຄວາມຄິດຄວາມເຫັນແຕ່ລະພາກສ່ວນທີ່ກ່າວເຖິງຄຸນປະໂຫຍດຂອງໃບລານ ພ້ອມທັງເຫັນຜົນເສັຽຫາຍໄລຍະຜ່ານມາ ແລະ ກອງປະຊຸມເທື່ອນີ້ ມັນເປັນການອະນຸລັກ ແລະ ຟື້ນຟູວັດທະນະທຳ ໃນເຂດຈຳປາສັກພວກເຮົາຢ່າງແທ້ຈິງ. ພວກເຮົາມີຫນ້າທີ່ຮັບຜິດຊອບໂດຍກົງໃນການປຸກລະດົມປະຊາຊົນ ເຂົ້າຮ່ວມໂຄງການປົກປັກຮັກສາຫນັງສືໃບລານ ໃນເມືອງພວກເຮົາ ເຮັດແນວໃດໃຫ້ປະຊາຊົນ ແລະ ພະເຈົ້າພະສົງເຫັນໄດ້ຄວາມຫມາຍ ແລະ ເຂົ້າໃຈແຈ້ງຕໍ່ກັບການອະນຸລັກ ບໍ່ແມ່ນວ່າຈະເອົາໄປໄວ້ບ່ອນອື່ນ.

**ອ່ານຕໍ່ຫນ້າ 13**

# ຍາມດອກໄມ້ບານ

## ທີ່ເມືອງ ຍອດອູ

ໂດຍ : ຄຳແສງດາວ ປະກຸ້ມມະວົງ

ຊາວ ບ້ານອູໃຕ້ ພ້ອມພາກັນກະກຽມສະຫລອງວັນສ້າງຕັ້ງພັກຄົບຮອບ 45 ປີ ທີ່ຈະມາເຖິງໃນວັນທີ 22 ມີນາ 2000 ນີ້, ພ້ອມກັນນີ້ ກໍ່ໄດ້ຈັດງານສະຫລອງທາດກົ່ວອໍຂຶ້ນ ໃນຕອນເຊົ້າ ຂອງວັນທີ 20 ມີນາ 2000 ຫ່າງຈາກຕົວເມືອງໄປທາງທິດຕາເວັນອອກ 3 ກິໂລແມັດ ຢູ່ເທິງຈອມພູນ້ອຍ ແລເຫັນທົ່ວທັດຕົວເມືອງອູໃຕ້ຢາຍໄປຕາມສາຍນ້ຳອູທັງສອງເບື້ອງ ແລະມີທົ່ງນາອ້ອມຮອບຕົວເມືອງ.

ພໍຮອດ 3 ໂມງເຊົ້າ ແຕ່ລະຄອບຄົວພາກັນລຸກຫນຶ້ງເຂົ້າ ຫ້າງຫາກະກຽມເຄື່ອງສັງຄະທານຕ່າງໆ ຮອດ 6 ໂມງເຊົ້າ ແຕ່ລະຄົນມຸ່ງຫນ້າໄປຫາທາດດ້ວຍຄວາມຍິ້ມແຍ້ມແຈ່ມໃສ ການນຸ່ງກໍ່ແຕ່ລະຄົນຍັງຮັກສາແບບໄທລື້ ການນຳພາເຮັດບຸນນີ້ ແມ່ນມີການຈັດຕັ້ງຮັບຜິດຊອບຄັກແນ່ຈາກການຈັດຕັ້ງແຕ່ລະຂັ້ນ.

ທາດກົ່ວອໍ ແມ່ນທາດຫນຶ່ງໃນຈຳນວນທາດ 3 ດວງທີ່ໄດ້ສ້າງຂຶ້ນຢູ່ເມືອງຈຸ່ມຄຳ ພາຍຫລັງສະຄາດ (ສັງກາດ) ໄດ້ 399 ປີ. ພະເຈົ້າໂຄຕະມະລົງມາເຂົ້າທ້ອງແມ່ ເດືອນ 8 ຂຶ້ນ 15 ຄ່ຳ ວັນພະຫັດ ຍາມຈະໃກ້ຮຸ່ງ ພະເຈົ້າຢູ່ທ້ອງແມ່ໄດ້ 10 ເດືອນ ປະສູດອອກທ້ອງແມ່ ປີເປືອກເລດສະຄາດໄດ້ 340 ປີ ເດືອນ 6 ຂຶ້ນ 15 ຄ່ຳ ແມ່ນວັນສຸກ ຍາມຈະໃກ້ຮຸ່ງແຈ້ງ ພາຍຫລັງປະສູດອອກທ້ອງແມ່ຮອດອາຍຸ 16 ປີ ແມ່ນປີກາເປົ້າ ໄດ້ເປັນພະຍາສິທາດ ໄດ້ສະເຫວີຍເມືອງຮອດ 13 ປີ ເຖິງ 29 ປີ, ປີເມືອງເມົ້າ ໄດ້ອອກໄປບວດເປັນພະ ນານໄດ້ 20 ປີ, ປີເຕົ່າສັນ ໄດ້ແທດພະຍາ ເດືອນ 2 ຂຶ້ນ 15 ຄ່ຳ ວັນພຸດ ຍາມຟ້າຈະຮຸ່ງແຈ້ງ ເປັນພະ ນານໄດ້ 45 ພັນສາ ເພິ່ນຈຶ່ງໄດ້ລົງມາລຽບໂລກ.

ເພິ່ນໄດ້ມາລຽບໂລກເບິ່ງ ເຫັນວ່າ ເມືອງຈຸ່ມຄຳໄດ້ຕັ້ງທາດຂຶ້ນ 3 ດວງແລ້ວ ເພິ່ນຈຶ່ງກັບຄືນໄປສັ່ງໃຫ້ມະຫາເຖນທັງຫລາຍ ວ່າເມືອງຈຸ່ມຄຳໄດ້ຕັ້ງທາດຂຶ້ນ 3ດວງ ແລ້ວເພິ່ນກໍ່ໄດ້ສິ້ນພະຊົນຢູ່ເມືອງກູສິນາລາຍ ປະເທດອິນເດຍ ລວມອາຍຸໄດ້ 80 ປີ, ໃນປີເມືອງໃສ້ ເດືອນ 6 ຂຶ້ນ 15 ຄ່ຳ ຍາມຈະໃກ້ຮຸ່ງ.



ພາຍຫລັງມະຫາເຖນທັງຫລາຍໄດ້ຮັບຄຳສັ່ງຈາກພະເຈົ້າໂຄຕະມະແລ້ວ ມະຫາເຖນທັງຫລາຍກໍ່ໄດ້ມາກວດກາ ເຫັນວ່າ ເມືອງຈຸ່ມຄຳໄດ້ຕັ້ງທາດຂຶ້ນ 3 ດວງແລ້ວ ມະຫາເຖນທັງຫລາຍຈຶ່ງໄດ້ສັ່ງໃຫ້ໄພ່ເມືອງທັງຫລາຍໄປຮັບເອົາກະດູກ ຂອງພະເຈົ້າໂຄຕະມະຢູ່ເມືອງກຸສິນາລາຍ ປະເທດອິນເດຍ ກັບຄືນມາກໍ່ສ້າງທາດຂຶ້ນຢູ່ເມືອງຄຳໃນເວລານັ້ນ ມະຫາເຖນວະລິຍະລ່ານປ່າ ເປັນຜູ້ຮັບເອົາກະດູກຂອງພະເຈົ້າໂຄຕະມະ ມາສ້າງທາດກົ່ວອໍດວງນີ້ຂຶ້ນ ໃນປີ 349. ມາປະຈຸບັນ ອາຍຸການຂອງທາດກົ່ວອໍດວງນີ້ແມ່ນໄດ້ 2.064 ປີ, ເມື່ອເປັນແນວນັ້ນ ມະຫາເຖນທັງຫລາຍເພິ່ນກວດກາເຫັນວ່າ ເມືອງຈຸ່ມຄຳໄດ້ຕັ້ງທາດຂຶ້ນ 3 ດວງ. ດວງທີ່ 1 ແມ່ນທາດກົ່ວອໍ, ດວງທີ່ 2 ແມ່ນ ທາດກົ່ວແອກ ແລະ ດວງທີ່ 3 ແມ່ນທາດຫົວເມືອງ. ສ່ວນປະຫວັດການ



ເປັນມາຂອງທາດ ກິ່ວອໍນີ້, ນັບ ຫລາຍເສັ່ນຄົນ, ເຖິງໃນເມື່ອກ່ອນແມ່ນພົບຄວາມອຶດຢາກຂາດເຂີນ, ການເຮັດໄຮ່, ເຮັດນາກໍ່ບໍ່ກຸ້ມຢູ່ພໍກິນ, ຄວາມອຸດົມຮັ່ງມີແມ່ນບໍ່ມີ. ດັ່ງນັ້ນມະຫາເຖນເພິ່ນຈຶ່ງໄດ້ກວດເບິ່ງ ເຫັນວ່າຂອບເຂດເມືອງກົ້ນຮົ່ວ, ແລ້ວມະຫາເຖນເພິ່ນຈຶ່ງໄດ້ຕົກລົງວ່າ ໃຫ້ກໍ່ສ້າງທາດດວງນີ້ຂຶ້ນມີນາມວ່າທາດກິ່ວອໍ ຢູ່ທາງທິດຕາເວັນຕົກ ແຈ່ງໃຕ້. ທາດກິ່ວອໍດວງນີ້ແມ່ນໄດ້ກໍ່ສ້າງຂຶ້ນຢູ່ຈອມພູນ້ອຍຫນ່ວຍນຶ່ງ ເບື້ອງຊ້າຍມີນ້ຳຫ້ວຍອໍໄຫລອ້ອມ, ຢູ່ເບື້ອງຂວາ ມີແມ່ນ້ຳອູໄຫລຜ່ານຢູ່ຕີນພູ ທາງທິດຕາເວັນອອກມີທົ່ງນາອັນກ້ວາງໃຫຍ່.

ທາດກິ່ວອໍດວງນີ້ ແມ່ນໄດ້ສ້າງຂຶ້ນພາຍຫລັງສ້າງວັດຫລວງອູໃຕ້, ມີອາຍຸເຖິງ 2.064 ປີກວ່າ. ຜູ້ປະຕິບັດໃນການກໍ່ສ້າງທາດດວງນີ້ ແມ່ນມະຫາເຖນອະລິຍະລ່ານປ່າ ເປັນຜູ້ສ້າງຂຶ້ນ ພາຍຫລັງມະຫາເຖນ ເພິ່ນໄດ້ກໍ່ສ້າງທາດດວງນີ້ຂຶ້ນແລ້ວ ປະຊາຊົນຊາວບ້ານອູໃຕ້ຈຶ່ງກຸ້ມຢູ່ພໍກິນ ແລະ ມີຄວາມອຸດົມສົມບູນເຖິງປະຈຸບັນ.

ແຕ່ຕົກມາໃນປີ 1978 ມີການປະລະວັດວາອາຣາມໄປໃນຊົ່ວໄລຍະຫນຶ່ງ ເຮັດໃຫ້ໃບຫນ້າຂອງປະຊາຊົນຊາວເມືອງຍອດອູ ມີຄວາມເສົ້າຫມອງ, ທາດແຕ່ລະດວງກໍ່ເປ່ເພຍ້ອນປະຊາຊົນພາຍໃນເຫດສະບານ ຂາດການປົກປັກຮັກສາ ແລະ ປະຕິສັງຂອນ. ຕົກມາປີ 1986 ທາດກິ່ວອໍກໍ່ຖືກທຳລາຍໂດຍຄົນບໍ່ດີຈາກຕ່າງເມືອງໄດ້ໄປຂຸດຄົ້ນເອົາແກ້ວແສງອັນປະເສີດຢູ່ໃນດວງໃຈຂອງທາດກິ່ວອໍ ອັນເຮັດໃຫ້ທາດກິ່ວອໍຊຸດໂຊມ ແລະ ເກື່ອນເພຈາກເງື້ອມມືຂອງຄົນຕ່າງກຸ່ມ. ຕົກມາ ປີ1998 ຈຶ່ງໄດ້ສ້ອມແປງຄືນແຕ່ກໍ່ສ້ອມແປງພຽງແຕ່ຮູບຮ່າງຂອງທາດເທົ່ານັ້ນ. ສະນັ້ນ ປະຊາຊົນ 6 ບ້ານພາຍໃນເຫດສະບານ ເມືອງຍອດອູຈຶ່ງໄດ້ຕົກລົງ ແລະ ພ້ອມພາກັນບູລະນະປະຕິສັງຂອນທາດແຕ່ລະດວງຄືນໃຫມ່ ແຕ່ປີ 1999 ເຖິງປີ 2000 ໃຫ້ສຳເລັດຕາມຈຸດປະສົງທີ່ວາງໄວ້. ປະຊາຊົນບ້ານກາດ ໄດ້ຮັບກຽດເປັນເຈົ້າພາບໃນການກໍ່ສ້າງສ້ອມແປງໃນຄັ້ງນີ້.

ສໍາພາດ ຕໍ່ຈາກໜ້າ 11



**ທ່ານ ຄຳໄພ**
**ຮອງເຈົ້າເມືອງງປາກຊອງ**

ຕໍ່ກອງປະຊຸມເທື່ອນີ້ ຂ້າພະເຈົ້າຮັບຮູ້ສິ່ງໃຫມ່ແນວຄິດຈິດໃຈອັນໃຫມ່ນີ້ ເພາະວ່າບໍ່ເຄີຍໄດ້ຍິນ ບໍ່ເຄີຍໄດ້ຮູ້ຈັກເທື່ອ ຕັ້ງແຕ່ເຮັດວຽກຜ່ານມາ. ສະນັ້ນ ເວົ້າລວມແລ້ວຜ່ານມາບໍ່ຮູ້ຈັກຄວາມຫມາຍຄວາມສຳຄັນກ່ຽວກັບການປົກປັກຮັກສາຫນັງສືໃບລານນີ້ ສະນັ້ນ ກອງປະຊຸມເທື່ອນີ້ ຂ້າພະເຈົ້າດີອົກດີໃຈຫລາຍ ເວົ້າເຖິງຫນັງສືຜູກໃບລານຢູ່ທາງບ້ານທາງເມືອງພວກເຮົາກໍ່ມີຫລາຍທີ່ສຸດ ຕໍ່ໄປ ຈະໄດ້ປົກປັກຮັກສາໄວ້ໃຫ້ລູກຫລານນຳໃຊ້ໃນອະນາຄົດ ໃນຖານະຂ້າພະເຈົ້າຢູ່ໃນອຳນາດການປົກຄອງ ພາຍຫລັງກັບຈາກກອງປະຊຸມນີ້ແລ້ວ ກໍ່ຈະໄດ້ກະກຽມບັນຫາທີ່ຈຳເປັນສຳລັບລົງໄປຫນ່ວຍສຳຫລວດລົງມາຮອດເມືອງພວກເຮົາ. ຈະຈັດຕັ້ງຄະນະຮ່ວມນຳກັບບັນແຕ່ຂະແຫນງຂ່າວ, ວັດທະນະທຳ, ແນວໂຮມ ແລະ ຫນ່ວຍງານການປົກຄອງຈຳນວນຫນຶ່ງ ໄປຮ່ວມເຂົ້າໃນວຽກງານກວດກາເທື່ອນີ້ ເພື່ອເຮັດໃຫ້ຮັບປະກັນໄດ້ຜົນດີ. ອ່ານຕໍ່ໜ້າ 16

# ແສງສະຫວ່າງ ທີ່ເມືອງຍອດອູ

ໂດຍ : ຄຳແສງດາວ ປະກັນມະວົງ



ວັນທີ 21 ມີນາ 2000 ຢູ່ເມືອງຍອດອູ ແຂວງຜົ້ງສາລີ ຄະນະໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມື ລາວ - ເຢຍຣະມັນ ໄດ້ປະສານສົມທົບກັບຫ້ອງການກະແຫລງຂ່າວ ແລະ ວັດທະນະທຳເມືອງ ຫ້ອງການແນວໂຮມເມືອງ ໄດ້ເປີດກອງປະຊຸມຂຶ້ນທີ່ສະໂມສອນຂອງເມືອງ ໂດຍການເຫັນດີຂອງຄະນະປະຈຳພັກເມືອງ ແລະ ມີພະນັກງານຈາກຫ້ອງການຕ່າງໆອ້ອມຂ້າງເມືອງ ແລະ ປກສເມືອງກໍ່ໄດ້ເຂົ້າຮ່ວມ ພ້ອມທັງພະສົງສາມະເນນ, ແນວໂຮມ ແລະ ຜູ້ຊົງຄຸນວຸດທິເຂົ້າຮ່ວມຈຳນວນນຶ່ງ. ທາງໂຄງການມີຄະນະໂຄງການ 1 ທ່ານ ຊ່ຽວຊານ ສ.ສ.ຢ ຂອງໂຄງການ 1 ທ່ານ, ທ່ານຫົວໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດ ທ່ານຫົວໜ້າແນວໂຮມແຂວງຜົ້ງສາລີ ໄດ້ເຂົ້າຮ່ວມກອງປະຊຸມປະກອບຄຳຄິດຄຳເຫັນຕໍ່ວຽກງານຂອງໂຄງການ ໂດຍທາງເມືອງໄດ້ມອບໝາຍໃຫ້ຫ້ອງການແນວໂຮມເມືອງເປັນຜູ້ຮັບຜິດຊອບຕໍ່ກອງປະຊຸມດັ່ງກ່າວ.

ພາຍຫລັງຄະນະຈັດຕັ້ງກອງປະຊຸມໄດ້ກ່າວຈຸດປະສົງຕໍ່ທີ່ປະຊຸມຊາບແລ້ວ ຄະນະໂຄງການ ທ່ານຄຳແສງດາວ ໄດ້ສະເຫນີຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ ແລະ ໄດ້ແຈ້ງຜົນງານຫຍໍ້ຂອງການສຳຫລວດຜ່ານມາ 8 ປີ. ຫລັງຈາກນັ້ນ ທ່ານ ດຣ ຈັນທະພິລິດ ຈຽມສີສຸລາດ ຫົວໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດໄດ້ສະເໜີນະໂຍບາຍລວມຂອງວຽກງານກະແຫລງຂ່າວ ແລະ ວັດທະນະທຳ ເວົ້າສະເພາະຕໍ່ໂຄງການປົກປັກຮັກສາໜັງສືໃບລານລາວ ຕໍ່ຈາກນັ້ນຄະນະຈັດຕັ້ງໄດ້ເຊີນ ທ່ານສາສະດາຈານ ດຣ. ຮາຣັນຣຸນດິອຸສ ຊ່ຽວຊານ ປະຈຳໂຄງການສະເໜີນະໂຍບາຍລວມຂອງລັດຖະບານ ສ.ສ.ຢ ທີ່ ໃຫ້ການຊ່ວຍເຫລືອຕ່າງປະເທດ ແລະ ເວົ້າສະເພາະຕໍ່ການຊ່ວຍເຫລືອໃຫ້ແກ່ໂຄງການປົກປັກຮັກສາໜັງສືໃບລານລາວ. ຈາກນັ້ນ ທ່ານຫົວໜ້າແນວໂຮມແຂວງ ຜົ້ງສາລີ ໄດ້ປະກອບຄຳຄິດຄຳເຫັນຕໍ່ທີ່ປະຊຸມ.

ທ່ານຮອງຫົວໜ້າແນວໂຮມແຂວງຍັງຈະສືບຕໍ່ເຮັດວຽກນຳໜ່ວຍສຳຫລວດຂອງໂຄງການ ເຮັດການສຳຫລວດໜັງສືໃບລານ ຢູ່ສອງບ້ານຄື : ບ້ານອູໃຕ້ ແລະ ບ້ານອູເໜືອ ຈະໃຊ້ເວລາເຮັດການສຳຫລວດຢູ່ເມືອງຍອດອູຮອດທ້າຍເດືອນມີນາ 2000 ຈຶ່ງຈະສຳເລັດການສຳຫລວດຢູ່ໃນສອງເມືອງນີ້.

---

ມັງຄະລະສູດ ຕໍ່ຈາກໜ້າ 8

ພາຫຸສັຈຈັນຈະ ສິປປັນຈະ ວິນະໂຍ ຈະ ສຸສິກຂິໂຕ
ສຸພາສິຕາ ຈະ ຍາ ວາຈາ ເອຕັມມັງຄະລະມຸຕຕະມັງ.

7. ເມົາປະເທດດ້າວ ແດນເກີດຄວາມຈະເລີນ,
ພູນເຟື່ອງບຸນ ກ່ອນການຮຸ່ງເຮືອງ
ເອົາຕົນຕັ້ງ ຕາມທັມທາງປະເສີດ
ສາມນີ້ ມັງຄະເລດລ້ຳ ທັມແທ້ທີ່ອຸດົມ ແທ້ເນີ.

8. ໄດ້ສະດັບ ຮຽນຮ່ຳແລ້ວ ທຸກສິ່ງ, ມີສິນ,
ສຶກສາ ມີວິນັຍງາມ ແບບແຜນເຝິກພ້ອມ
ເຈັຣອະຈາກ້ອຍ ສຸພາສິດສຽງມ່ວນ;
ສີ່ນີ້ ມັງຄະເລດຂໍ້ ຄວນເວົ້າວ່າອຸດົມ ແທ້ນາ.

ອ່ານຕໍ່ໜ້າ 19

ຕໍ່ຈາກໜ້າ 13

## ສຳພາດຜູ້ແທນ



ທ່ານ ບຸນທັນ ພົມມະວົງ
ຫົວໜ້າຫ້ອງການກະແຫລງຂ່າວ ແລະ ວັດທະນະທຳ
ເມືອງ ມຸນລະປະໂມກ

ເມືອງມຸນລະປະໂມກ ເປັນເມືອງໜຶ່ງທີ່ມີວັດວາອາຮາມເກົ່າແກ່, ມີວັດສຳຄັນຫລາຍແຫ່ງ, ມີໜັງສືຜູກໃບລານໃນບາງວັດ. ການຮ່ວມສຳມະນາຄັ້ງນີ້ ແມ່ນໄດ້ບົດຮຽນຫລາຍຢ່າງທີ່ຈະນຳລົງໄປກະກຽມ, ປຸກລະດົມຂະບວນການເຊັ່ນ : ອ.ພ.ສ. ເມືອງ,ອຳນາດການປົກຄອງຂັ້ນບ້ານ, ແນວໂຮມ ແລະ ພາກສ່ວນອື່ນໆພາຍໃນເມືອງ ເຮັດແນວໃດ ໃຫ້ເຂົາເຈົ້າຮູ້ຈັກຄຸນຄ່າຂອງໜັງສືໃບລານອັນເປັນພູມປັນຍາຂອງຄົນສະໄຫມບູຮານໄດ້ສ້າງໄວ້ໃຫ້ລູກຫລານສືບຕໍ່. ສະນັ້ນ ການມາຮ່ວມສຳມະນານີ້ ຈຶ່ງເຮັດໃຫ້ຂ້າພະເຈົ້າສົນໃຈຫລາຍບັນຫາ ເປັນຕົ້ນແມ່ນວິທີການເກັບກຳຂໍ້ມູນ ພາຍຫລັງທີ່ກັບຈາກຮ່ວມກອງປະຊຸມນີ້ແລ້ວ ຈະໄດ້ໄປຈັດຕັ້ງປະຕິບັດຫລາຍຂັ້ນຕອນ ເຊັ່ນ : ພາຫະນະ, ອຸປະກອນຮັບໃຊ້, ສຳລັບການຈັດຕັ້ງປະຕິບັດນັ້ນ ບັນດາວັດຫ່າງໄກຈາກຕົວເມືອງ ຕ້ອງໄດ້ໃຊ້ພາຫະນະໃນການໄປມາ.



ຫົວໜ້າຫ້ອງການກະແຫລງຂ່າວ ແລະ ວັດທະນະທຳ ເມືອງບາຈຽງ

ວຽກງານປົກປັກຮັກສາໜັງສືຜູກໃບລານ ເປັນວຽກງານທີ່ຂັ້ນເທິງເອົາໃຈໃສ່ໃຫ້ຄວາມສຳຄັນ ໃນການປົກປັກຮັກສາວັດທະນະທຳທີ່ເກົ່າແກ່ໄວ້ ດັ່ງການເກັບມ້ຽນ, ການປົກປັກຮັກສາໃບລານໃຫ້ມີອາຍຸຍືນຍົງຄົງຕົວ ເປັນຫຍັງພວກເຮົາຈຶ່ງເອົາໃຈໃສ່ກ່ຽວກັບການເກັບມ້ຽນໜັງສືໃບລານອັນນີ້ ຍ້ອນວ່າ: ຢູ່ໃນໄລຍະນີ້ ຄວາມເຂົ້າໃຈຂອງຄົນຮຸ່ນໃໝ່ທີ່ມີຕໍ່ໜັງສືໃບລານ ຍັງມີລັກສະນະບໍ່ເປັນຫວ່ງເປັນໄຍເທົ່າທີ່ຄວນ ໝາຍວ່າ: ບໍ່ເຫັນຄຸນຄ່າ ແລະ ຄວາມສຳຄັນຂອງໜັງສືໃບລານ. ສະນັ້ນ ຫລັງຈາກກັບເມືອງແລ້ວ ຈະໄດ້ເຕົ້າໂຮມອຳນາດການປົກຄອງ, ເຖົ້າແກ່ແນວໂຮມແຕ່ລະທ້ອງຖິ່ນ ສົມທົບກັບພະສົງສຳມະເນນ ຮ່ວມກັນເກັບມ້ຽນຄືນ, ປຸກລະດົມໃຫ້ແຕ່ລະພາກສ່ວນເຂົ້າໃຈໃນການປົກປັກຮັກສາອະນຸລັກມໍລະດົກອັນເກົ່າແກ່ຂອງລາວເຮົາໄວ້.

ທ່ານ ສ. ລິດທະລາດ
ຫົວໜ້າຫ້ອງການວັດທະນະທຳ ເມືອງໂຂງ



ຜ່ານການຮ່ວມກອງປະຊຸມ ເຫັນວ່າຂໍ້ມູນ ຫລືວ່າ ທຸກບັນຫາທີ່ອົບຮົມມາເປັນຜົນດີໃຫ້ແກ່ທາງເມືອງ ເພື່ອກະກຽມສືບຕໍ່ເຄື່ອນໄຫວເກັບກຳຂໍ້ມູນ ຂຶ້ນບັນຊີໜັງສືໃບລານ ເຊິ່ງຢູ່ໃນເມືອງໂຂງຍັງ 10 ກວ່າວັດ ທີ່ບໍ່ທັນໄດ້ຂຶ້ນບັນຊີ ແຕ່ລະວັດກໍ່ມີໜັງສືໃບລານຈຳນວນຫລວງຫລາຍ ຜ່ານການຈັດຕັ້ງປະຕິບັດຜ່ານມາ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການປົກປັກຮັກສາໜັງສືໃບລານ (ອຸປະຖຳໂດຍມູນນິທິໂຕໂຍຕາ) ແລະ ໄດ້ລົງເຄື່ອນໄຫວເກັບກຳຂໍ້ມູນຂຶ້ນບັນຊີໜັງສືໃບລານຢູ່ 5 ວັດ ມີຈຳນວນ 3,704 ຜູກ. ທັງນີ້ ກໍ່ຍ້ອນວ່າການຂຶ້ນບັນຊີໜັງສື ໄດ້ຮັບຄວາມສະດວກຈາກອຳນາດການປົກຄອງທຸກຂັ້ນ ຕະຫລອດຮອດພະສົງສຳມະເນນ ແລະ ປະຊາຊົນໃຫ້ຄວາມຮ່ວມໄມ້ຮ່ວມມື ຜ່ານກອງປະຊຸມນີ້ ຈະເຮັດໃຫ້ເມືອງໂຂງພວກຂ້າພະເຈົ້າຈະໃຫ້ຂໍ້ສະດວກໃນການຂຶ້ນບັນຊີຢູ່ຕາມວັດຕ່າງໆ ເປັນຕົ້ນແມ່ນອຸປະກອນຕ່າງໆ ທີ່ທາງໂຄງການຈະຊ່ວຍເຫລືອເພື່ອໄປສືບຕໍ່ ແລະ ຂຶ້ນບັນຊີໜັງສືທີ່ຍັງຄົງຄ້າງໃຫ້ສຳເລັດໄປດ້ວຍດີ.

ສຳພາດ ຕໍ່ຈາກໜ້າ 13



**ທ່ານ ທອງສາ ສຸລິຍະວົງ**

**ຫົວໜ້າຖະແຫລງຂ່າວ ແລະ ວັດທະນະທຳ ເມືອງໂພນທອງ**

ຕາງໜ້າເມືອງໂພນທອງ ຂໍສະແດງຄວາມດີໃຈທີ່ທາງໂຄງການປົກປັກຮັກສາໜັງສືໃບລານ ໄຂກອງປະຊຸມຂຶ້ນໃໝ່ ໂດຍສະເພາະ ຢູ່ໃນແຂວງຈຳປາສັກ ທີ່ລໍຄອຍໂຄງການນີ້ມາດົນນານ. ຕໍ່ໄປ ຈະສືບຕໍ່ປົກປັກຮັກສາບຳພາເກົ້າແກ່ແນວໂຮມ ພ້ອມທັງພະສົງອົງຄະເຈົ້າ ທີ່ນັບຖືສາສະໜາພຸດໃຫ້ເຫັນຄວາມໝາຍຄວາມສຳຄັນໃນການປົກປັກຮັກສາ ແລະ ເພື່ອສືບຕໍ່ໃຫ້ລູກຫລານໃນອະນາຄົດໄດ້ຮ່ຳຮຽນ ໃນໄລຍະຜ່ານມາ ເມືອງໂພນທອງ ໂດຍສະເພາະ ແມ່ນຫ້ອງການຖະແຫລງຂ່າວ- ວັດທະນະທຳເມືອງ ສົມທົບກັບອຳນາດການປົກຄອງທຸກພາກສ່ວນ ແລະ ຄະນະ ອ.ພ.ສ. ເມືອງ ແລະ ເຂດ, ເຈົ້າອະທິການວັດໄດ້ພ້ອມກັນເກັບກຳຂໍ້ມູນໜັງສືໃບລານທີ່ມີຢູ່ ທັງປົກປັກຮັກສາບໍ່ໃຫ້ຕົກເຮ່ຍເສຍຫາຍ ເພື່ອໃຫ້ຄະນະລົງກວດກາ ຂໍ້ມູນທີ່ເມືອງໄດ້ສົ່ງໃຫ້ພະແນກຖະແຫລງຂ່າວ ແລະ ວັດທະນະທຳທົ່ວເມືອງມີ 93 ວັດ (ບໍ່ມີວັດຮ້າງ) ມີ ພະສົງ 235 ອົງ ສາມະເນນ 287 ອົງ ວັດທີ່ສຳຄັນໃນໄລຍະຜ່ານມາ ແມ່ນໄດ້ປົກປັກຮັກສາໜັງສືໃບລານດີ ແຕ່ຕົກມາໄລຍະນຶ່ງທີ່ຜູ້ຮັກສາເສຍຊີວິດໄປແລ້ວກໍ່ບໍ່ມີຜູ້ຂໍສືບທອດ ສະນັ້ນ ຕໍ່ໄປ ທາງວັດທະນະທຳເມືອງ ຈະໄດ້ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມໄປຜັນຂະຫຍາຍ ແລະ ກຽມພ້ອມຕ້ອນຮັບຄະນະສຳຫລວດໜັງສືໃບລານ ທີ່ຈະລົງໄປກວດກາ ໃຫ້ໄດ້ຮັບຄວາມສະດວກ ແລະ ສຳເລັດຜົນ.

**ທ່ານ ບຸນຫລ້າ ສຸຣິມະວົງ**

**ປະທານແນວລາວສ້າງຊາດ ເມືອງຊະນະສົມບູນ**



ການທີ່ຂ້າພະເຈົ້າໄດ້ຮ່ວມກອງປະຊຸມເທື່ອນີ້ ມີຄວາມຮູ້ສຶກພູມໃຈເປັນພິເສດ. ສະເພາະແມ່ນໄດ້ຮັບຮູ້ອັນໃໝ່ໃນວັດຖຸເກົ່າ ຄືການຄົ້ນຄວ້າຢູ່ໃນກອງປະຊຸມ ຫລາຍທ່ານກໍ່ຍົກໃຫ້ເຫັນຄວາມໝາຍຄວາມສຳຄັນຂອງໜັງສືໃບລານລາວ. ໂດຍສະເພາະ ທ່ານ ດຣ. ຮາຣັນ ຣຸນດີອຸສ ເວົ້າວ່າໜັງສືລາວ ແມ່ນຄົນລາວເປັນຜູ້ສ້າງຂຶ້ນ ໂດຍສະເພາະແມ່ນໂຕທຳ. ຂ້າພະເຈົ້າມີຄວາມພູມໃຈຫລາຍໃນຄຳເວົ້າ ແລະ ຄວາມຮູ້ສຶກອັນນີ້.

ຂ້າພະເຈົ້າໃນນາມຕາງໜ້າໃຫ້ແນວລາວສ້າງຊາດເມືອງ ຊຶ່ງເປັນອົງການຈັດຕັ້ງໜຶ່ງທີ່ສຳຄັນ ໃນການຈັດຕັ້ງຂົນຂວາຍປຸກລະດົມຄວາມສາມັກຄີບັນດາເຜົ່າ ຊັ້ນຄົນ ແລະ ສາສະໜາໃນທົ່ວປວງຊົນ. ຈັ່ງຊັ້ນ ເມື່ອໄດ້ຮັບບົດຮຽນຈາກກອງປະຊຸມເທື່ອນີ້ແລ້ວ ຂ້າພະເຈົ້າກໍແມ່ນຜູ້ໜຶ່ງທີ່ຈະຕ້ອງໄດ້ປຸກລະດົມທົ່ວປວງຊົນ ໃຫ້ເຂົ້າຮ່ວມການປົກປັກຮັກສາກວດ ກາ, ມ້ຽນມັດເຮັດໃຫ້ວັດຖຸບູຮານດັ່ງກ່າວນີ້ໄດ້ສືບທອດຢ່າງຍາວນານ. ຜ່ານມາ ການໃຊ້ໜັງສືໃບລານຢູ່ໃນເມືອງພວກເຮົາກໍ່ຍັງໃຊ້ຢູ່ຢ່າງເປັນປະຈຳ ໃນຍາມມີບຸນເພີ່ນຈະເອົາໜັງສືນີ້ໄປແຈກຢາຍໃນທົ່ວວັດຕ່າງໆເພື່ອເທດ ສ່ວນຫລາຍແມ່ນເລື່ອງພະເວດສັນດອນ.



**ທ່ານ ພູນສະຫວັດ**

**ຫົວໜ້າຫ້ອງການຖະແຫລງຂ່າວ-ວັດທະນະທຳ ເມືອງປາກເຊ**

ເມືອງປາກເຊ ເປັນເມືອງໜຶ່ງທີ່ມີວັດວາອາຣາມຫລາຍສົມຄວນ ມີເກືອງ 35 ວັດ. ເປັນຈຸດທີ່ຕັ້ງໜຶ່ງທີ່ມີທາງສາສະໜາຮຸ່ງເຮືອງມີນັກບວດທີ່ໄດ້ບວດຮຽນ, ຂຽນອ່ານໜັງສືໃບລານ ໃນໄລຍະຫລາຍປີຜ່ານມາ ການນຳໃຊ້ໜັງສືຜູກໃບລານຖືກປ່ອຍປະລະເລີຍ ມາຮອດປັດຈຸບັນການບວດຮຽນ, ຂຽນອ່ານ ກໍ່ໄດ້ນຳເອົາຕົວລາວມາຮຽນເປັນສ່ວນຫລາຍ, ສ່ວນຕົວທຳມີໜ້ອຍ ສົກປີ 1994 ຜ່ານມາກໍ່ໄດ້ມີການຂຶ້ນບັນຊີແລ້ວ 6 ວັດ ໂດຍການອຸປະກຳຂອງມູນນິທິໂຕໂຍຕາຈາກປະເທດຍີ່ປຸ່ນ ໃນນັ້ນມີໜັງສືໃບລານເກືອງ 2.000 ກວ່າຜູກ ຈົນມາຮອດປີນີ້ຈຶ່ງໄດ້ສືບຕໍ່ວຽກຂອງໂຄງການນີ້.

# ຮັກສາໃບລານທີ່ເມືອງ ໂພນທອງ

ເລີ່ມແຕ່ວັນທີ 13/11/98 ເປັນຕົ້ນມາ ຫນ່ວຍສຳຫລວດຫນັງສືໃບລານ ໄດ້ເຄື່ອນໄຫວຢູ່ເມືອງໂພນທອງ ແຂວງຈຳປາສັກ. ຄືພາຍຫລັງໄດ້ປຶກສາຫາລືວຽກງານລະອຽດ ກັບ ທ່ານ ອາດແກ້ວ ຮອງເຈົ້າເມືອງໆໂພນທອງ ແລະ ທ່ານ ທອງສາ ຮອງວັດທະນະທຳເມືອງໆໂພນທອງ ແລ້ວທັງສອງທ່ານ ຕ່າງກໍ່ໃຫ້ທັດສະນະວ່າ "ພ້ອມແລ້ວທີ່ຈະໃຫ້ຄວາມຮ່ວມມືຮອບດ້ານ" ເພື່ອອຳນວຍຄວາມສະດວກ ທ່ານຮອງເຈົ້າເມືອງ ໄດ້ມີຄຳສັ່ງແນະນຳລົງໄປແຕ່ລະບ້ານ ແຕ່ລະເຂດ ພາຍໃນເມືອງ ເພື່ອໃຫ້ປະຊາຊົນໄດ້ເຂົ້າຮ່ວມປົກປັກຮັກສາຫນັງສືໃບລານໂດຍທົ່ວເຖິງ.

ເມື່ອເຮັດວຽກຕົວຈິງໃນເຂດ 6 ຄື : ວັດສີສຸມັງ ບ້ານດົງຍາງ, ວັດສີສະຫວ່າງ ບ້ານແກ້ງກາງ ແລະ ວັດໂພສີວິກາຍ ບ້ານຫນອງດົງ ມີປະຊາຊົນເຂົ້າຮ່ວມທຳຄວາມສະອາດໃບລານຮອດ 284 ເທື່ອຄົນ, ພະເນນ 17 ອົງ ສະແດງເຖິງນ້ຳໃຈແຫ່ງຄວາມສາມັກຄີຂອງປະຊາຊົນໃນເຂດນີ້ ເຖິງຈະແມ່ນຍາກນຳລະດູເກັບກ່ຽວເຂົ້ານາ ແຕ່ເຂົາເຈົ້າກໍ່ຍາດເວລາເພື່ອເຮັດແນວໃດໃຫ້ມີໂອກາດປົກປັກຮັກສາມູນມໍລະດົກສ່ວນນີ້ໄວ້ໃຫ້ຫມັ້ນຄົງຊົ່ວລູກຫລານ. ໂດຍສະເພາະແມ່ນວັດສີສຸມັງ ບ້ານດົງຍາງ ປະຊາຊົນຮ່ວມກັບພະເນນພາຍໃນວັດ ກຳລັງສ້າງຫໍໄຕເພື່ອບັນຈຸຄຳພີຕ່າງໆ. ພວກເຂົາເຈົ້າມີຄວາມເອົາໃຈໃສ່ກ່ຽວກັບວັດວາສາສນາ ສົມກັບວ່າເປັນຊາວພຸດທີ່ແທ້ຈິງ. ການສຳຫລວດໃນເຂດ 6 ຈຳນວນ 3 ວັດນີ້ ມີຫນັງສືໃບລານທັງຫມົດ 1.968 ຜູກ ແລະມີເລື່ອງທີ່ສຳຄັນເຊັ່ນ : ລຳພະຍາຄັນຄາກ, ມະຫານິສອນໂລກ, ຄຳພີປາຣາຊິກັນ ພ.ສ 2451, ໂລກະນັຍຊາຕະກະ ພ.ສ 2466, ສິງຄະໂລ ພ.ສ 2497. ພາຍຫລັງທີ່ສຳຫລວດແລ້ວປະຊາຊົນ 3 ບ້ານດັ່ງກ່າວ ກໍ່ຍິ່ງເຫັນໄດ້ຄວາມຫມາຍ ແລະ ຄວາມສຳຄັນຂອງຫນັງສືຜູກໃບລານ ພ້ອມທັງຮູ້ວິທີວິທະຍາໃນການປົກປັກຮັກສາໃນໂອກາດຕໍ່ໄປອີກດ້ວຍ.



▲ ວັດສີສຸມັງ, ບ.ດົງຍາງ, ມ.ໂພນທອງ

ແຫ່ທັນ ຢູ່ ບ. ສະຫມັບ ມ. ໂພນທອງ ▼





ທ່ານ ທອງສາ ຮອງ ຖ/ວ ເມືອງໂພນທອງ ກຳລັງໂອ້ລົມກັບ ປ/ຊ

ຊາວບ້ານ ຝັ່ງແດງ ▶



# ການສຳຫລວດ ທີ່ເມືອງ ປະທຸມພອນ

✍ ໄພວົງ ທົງສັກສິດ



ຫນ່ວຍສຳຫລວດລົງໄປ ເມືອງປະທຸມພອນ ໃນວັນທີ 29 ກັນຍາ 1999 ໄດ້ຮັບການຕ້ອນຮັບຈາກ ທ່ານ ຄຳຜຸຍ ຫ້ອງການວັດທະນະທຳເມືອງຢ່າງອົບອຸ່ນ ຈາກນັ້ນ ທ່ານ ໄດ້ນຳພາຫນ່ວຍສຳຫລວດເຂົ້າພົບ ທ່ານ ບຸນຮົມ ດວງມີສີ ວ່າການເຈົ້າເມືອງໆປະທຸມພອນ ເພື່ອແຈ້ງຈຸດປະສົງ ແລະ ການເຮັດວຽກຢູ່ໃນຂອບເຂດຂອງເມືອງ.

ພາຍຫລັງຄົບຄ້ວາແລ້ວ ຫ້ອງການວັດທະນະທຳເມືອງຈຶ່ງໄດ້ກຳນົດບ່ອນສຳຫລວດຢູ່ 9 ຫມູ່ບ້ານມີ: ບ້ານປະທຸມພອນ, ບ້ານຫນອງບົວໃຫຍ່,



ພະອາຈານ ສີໄສ ສິດທິໄຊ
ຮອງ ພສສ ແຂວງ

ທ່ານ ບຸນຮົມ ດວງມີສີ
ວ່າການເຈົ້າເມືອງໆປະທຸມພອນ

ທ່ານ ຄຳຜຸຍ ສະນະໃນສັກ
ວັດທະນະທຳເມືອງ ປະທຸມພອນ



ບ້ານບຸ່ມ, ບ້ານພອງເພາະ, ບ້ານພະໂພ, ບ້ານສະມົງ, ບ້ານຫມໍ້ພູ, ບ້ານບັງລຽງໃນ ແລະ ບ້ານຜັກແພວ. (ສ່ວນພະໂພ ແລະ ບ້ານສະມົງບໍ່ໄດ້ໄປ ເພາະວ່າເສັ້ນທາງລຳບາກຫລາຍ ໄກຈາກທາງເລກ 13 ໄດ້ 30 ກິໂລແມັດ).

ໃນວັນ 30 ກັນຍາ 1999 ຄະນະຫນ່ວຍສຳຫລວດ ຮ່ວມກັບພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງ, ວັດທະນະທຳເມືອງ, ອ.ພ.ສ. ແຂວງ ແລະ ເມືອງ ໄດ້ຈັດຕັ້ງເປີດພິທີສຳຫລວດຂຶ້ນ ຢູ່ບ້ານປະທຸມພອນ ຊຶ່ງແມ່ນາຄເຂັ້ມຄົ້ນ ເຂົ້າຮ່ວມເປັນກຽດໃນຄັ້ງນີ້ມີ :

- ພະອາຈານ ສີໄສ ສິດທິໄຊ ຮອງ ອ.ພ.ສ. ແຂວງ



- ທ່ານ ສີປະເສີດ ແສນສະຫວັດ ຫົວຫນ້າພະແນກວັດທະນະທຳແຂວງ
- ທ່ານ ບຸນຮົມ ດວງມີສີ ວ່າການເຈົ້າເມືອງໆ ປະທຸມພອນ
- ພະອາຈານ ພົມມາ ແກ້ວມະນີໂຊດ ຮອງ ອ.ພ.ສ. ເມືອງ

ພ້ອມດ້ວຍຫ້ອງການວັດທະນະທຳເມືອງ, ນາຍບ້ານ, ແນວໂຮມບ້ານ, ພໍ່ແມ່ເຖົ້າແກ່, ສະຫະພັນແມ່ຍິງບ້ານ ແລະ ປະຊາຊົນພາຍໃນບ້ານ. ນອກນັ້ນ ຍັງມີ ຄຣູ ອາຈານ ນັກຮຽນສົງ, ຄຣູ ອາຈານ ນັກຮຽນທາງຄາຣະວາດ ກໍ່ໄດ້ເຂົ້າຮ່ວມເຊັ່ນດຽວກັນ .









ໃນພິທີ ແຕ່ລະທ່ານກໍ່ໄດ້ໃຫ້ຄວາມສຳຄັນຕໍ່ໂຄງການຢ່າງເລິກເຊິ່ງ ໂຄງການປົກປັກຮັກສາໜັງສືໃບລານ ເປັນໂຄງການຟື້ນຟູທາງດ້ານວັດທະນະທຳ ເພື່ອໃຫ້ລູກໃຫ້ຫລານໄດ້ສຶກສາຮ່ຳຮຽນຕໍ່ໄປ.

ຜ່ານການສຳຫລວດຕົວຈິງເຫັນໄດ້ວ່າ ເມືອງປະທຸມພອນມີວັດເກົ່າແກ່ຢູ່ ເຊັ່ນ : ວັດຣັຕຕະນະມຸງຄຸນ (ບ້ານພອງ ເຜາະ) ມີເອກະສານສຳຄັນເກົ່າແກ່ຢູ່ຫລາຍເລື່ອງ ອາຍຸປະມານ 300 ກວ່າປີ ເຊັ່ນ : ສະມັນຕະປາສາທິກາ ຈ.ສ. 982, (379 ປີ), ແລະ ຈ.ສ. 974, 387 ປີ. ມິລິນທະປັນຫາ ຈ.ສ. 1007 (354 ປີ).

ເມືອງປະທຸມພອນເປັນເມືອງໜຶ່ງ ທີ່ມີປະຊາຊົນໃຫ້ຄວາມຮ່ວມມືເປັນຢ່າງດີ ພ້ອມທັງສະແດງຄວາມຂອບໃຈຢ່າງລົ້ນເຫລືອຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ກໍ່ຄືໂຄງການໃບລານລາວ ການຮ່ວມມືລາວ-ເຢຍຣມັນ ທີ່ໄດ້ລົງໄປເກັບກຳເອົາຂໍ້ມູນມໍລະດົກທາງດ້ານວັດທະນະທຳ ກໍ່ຄື ພູມປັນຍາຂອງບັນພະຊົນຄືນໄວ້ອີກເທື່ອໜຶ່ງ.

**ມັງຄະລະສູດ ຕໍ່ຈາກໜ້າ 14**

ມາຕາປິຕຸອຸປັຕຖານັງ ປຸຕຕະທາຣັສສະ ສັງຄະໂຫ
ອະນາກຸລາ ຈະ ກັມມັນຕາ ເອຕັມມັງຄະລະມຸຕຕະມັງ.

9. ການລ້ຳລ້ຽງ ມາຕຸເຂດປິຕາ
ພຽນທອມບຸດ, ຟ້າແຜງເມັຽແກ້ວ
ການງານເກື້ອ ກະທຳຕີກ້ອນກີ່
ສີ່ນີ້ ມັງຄະເລດລ້ຳ ທັມແທ້ທີ່ອຸດົມ.

ທານັນຈະ ທັມມະຈະລິຍາ ຈະ ຍາຕະການັນ ຈະ ສັງຄະໂຫ
ອະນະວັຊານີ ກັມມານີ ເອຕັມມັງຄະລະມຸຕຕະມັງ

10. ທານແຜ່ເກື້ອ, ປະພຶດຟ້າເຜັງທັມ,
ສົງເຄາະຄູນ- ຍາຕິກາໄກ-ໃກ້
ການງານເກື້ອ ກັມດີດັບໂທດ
ມຸງຄຸນທັມ ສີ່ອ້ ເຮົາຮ້ອງວ່າ ອຸດົມ ແລນາ.

ອ່ານຕໍ່ສະບັບໜ້າ

## ສຸພາສິດບູຮານ (ປູ່ສອນຫລານ)

*ເກັບກຳໂດຍ : ບຸນເລີດ ທຳມະຈັກ*

* ມັກມີຫມູ່ ໃຫ້ຄ່ອຍປາກຄ່ອຍຂານ
ມັກຢາກກິນເຫິງນານ ໃຫ້ພຽນສິ່ງຂອງຝາກ
ເມື່ອຈັກປາກ ໃຫ້ແຍງດູຍາມ
ເມື່ອຈັກຖາມ ໃຫ້ແຍງດູຫນ້າ
ເມື່ອຈັກຫຍິບເສື້ອຜ້າ ໃຫ້ແຍງດູວັນ
ຄັນຈັກຫາຈັບມັນ ໃຫ້ແຍງດູທີ່
ຄັນຈັກຫນີ ໃຫ້ແຍງດູຜູ້ຮັກ
ມັກອັບ ໃຫ້ແຍງດູທີ່ມ່ອນ
ມັກໄປດ່ວນ ໃຫ້ກືຫາບອັນເບົາ
ເມື່ອຈັກເຊົາ ໃຫ້ແຍງດູບ່ອນນັ່ງ
* ທ່ານຊັງໃຫ້ຊັງຕອບ ທ່ານຊອບໃຫ້ຊອບນຳ
ທ່ານອຳໃຫ້ອຳແທນ ທ່ານແປນໃຫ້ແປນຕໍ່
ເຂົ້າເຮືອທ່ານກໍ່ ໃຫ້ເຮົາພາຍ
ເປັນນາຍໃຫ້ຮັກຫມູ່ ເປັນປູ່ໃຫ້ຮັກຫລານ
ໄດ້ເປັນຂຸນກວານ ໃຫ້ຮັກລູກບ້ານ
ເມື່ອປາກຕ້ານອັນໃດ ໃຫ້ເປັນປະຫັດ
ເມື່ອຮູ້ຊັດແລ້ວ ຈຶ່ງປາກຈາຄຳແຂງ
ຂອງເພື່ອນແພງ ໃຫ້ຫລີກເວັ້ນ
ຄັນວ່າເຕັ້ນບໍ່ຂ້າມ ໃຫ້ຄ່ອຍຫລີກຫນີໄກ
* ມີເງິນຄຳເຕັມກົງ ໃຫ້ໄດ້ໄວ້ໄກ່ຂ້ອຍ

ໃຫ້ຄ່ອຍຄິດອ່ານ ຫາວຽກຫາການ
ໃຫ້ຫານ ຂອງທີ່ວິເສດ
ຈັກເດີນເຫດ ໃຫ້ມີມິດສະຫາຍ
ທີ່ຍາກ ໃຫ້ຄ່ອຍປອງ
ທີ່ຫມອງ ໃຫ້ຄ່ອຍຜັດຄ່ອຍສີ
ບວດເປັນສົມເປັນຊີ ໃຫ້ຫມັ່ນຮຽນສູດ
ຫາບຈິຫລູດ ໃຫ້ຄ່ອຍແປງ
ກິນແກງ ໃຫ້ຄ່ອຍຊູດຄ່ອຍເປົ່າ
ປາຈິເຫນົ່າ ໃຫ້ຮີບກໍ່ຮີບພາຍ
* ເມື່ອຈິຕາຍໃຫ້ຮູ້ເຍື່ອງ ຂົວເດື່ອງໃຫ້ຄ່ອຍຄານ
ເມື່ອຈິເດີນທາງ ຢ່າຈາຄຳຄ້ານ
ເມື່ອຈິຕ້ານ ໃຫ້ຄຶດຫາຄຳຜິດ
ຢາກມີເພື່ອນມິດ ໃຫ້ທຳໃຈແຜ່ກວ້າງ
* ມັກນັ່ງແທ່ນ ໃຫ້ມີໃຈອົດ
ມັກມີຍົດ ໃຫ້ພຽນຂຶ້ນເຝົ້າເຈົ້າ
ມັກກິນເຂົ້າ ໃຫ້ຫມັ່ນເຮັດໄຮ່ນາ
ມັກກິນປາ ໃຫ້ພຽນກໍ່ຊຸ້ມ
ມັກເຂົ້າເຂດຄຸ້ມ ໃຫ້ຮູ້ຄອງຂຸນ
ມັກກະທຳບຸນ ໃຫ້ຢູ່ໃກ້ວັດ
ມັກກິນສັດ ໃຫ້ຢູ່ໃກ້ປ່າ ຈຶ່ງດີດາຍ.


### ເຈົ້າຂອງ

ໂຄງການປົກປັກຮັກສາໜັງສືໃບລານລາວ
(ການຮ່ວມມື ລາວ-ເຢຍຣະມັນ)

ສຳນັກງານ ຕັ້ງຢູ່
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຫໍສະໝຸດແຫ່ງຊາດ
ຖະໜົນເສດຖາທິຣາດ (ບ້ານພູ)

ຕູ້ ປ.ນ. 8818
ໂທ : (856-21) 251 405
ແຟັກ: (856-21) 213 029
E-mail : bailane@laotel.com

### ຄະນະຈັດທຳ

: ດາລາ ກັນລະຍາ
: ບຸນຍົກ ແສນສຸນທອນ
ຫົວໜ້າ ບ.ກ : ກິ່ງເດືອນ ເນດຕະວົງ
ຮອງຫົວໜ້າ ບ.ກ : ບຸນເລີດ ທຳມະຈັກ
ຈັດໜ້າ ຄອມພິວເຕີ : ສີສຸພັນ ດວງມະນີ
ຕີພິມຄອມພິວເຕີ : ບົວສີ ສີປະເສີດ
ຖ່າຍພາບ : ຄຳແສງດາວ ປະກັນມະວົງ
: ຄຳສິງ ວົງສະຫວ່າງ
: ໄພວົງ ທົງສັກສິດ
: ຄຳມຸກ ສີວິອາໄພ